GCI

# ບົດທີ 4

# ຫລັກການເປັນຜູ້ນຳທີ່ມີປະສິດທິພາບ

## ອາລຳພະບົດ

ຈຸດປະສົງຂອງບົດຮຽນ

- ເພື່ອສຶກສາເຖິງບຸກຄະລິກລັກສະນະ 7 ປະການຂອງຜູ້ນຳທີ່ມີປະສິດທິພາບ
- ເພື່ອສຶກສາຮູບແບບການເປັນຜູ້ນຳຂອງອັກຄະສາວົກໂປໂລ

## ໂຄງສ້າງບົດຮຽນ

I ອາລຳພະບົດ

ກ. ຄວາມສຳຂອງຜູ້ນຳ

ຂ. ຄຳນິຍາມສັບ

II. ບຸກຄະລິກລັກສະນະ 7 ປະການຂອງຜູ້ນຳທີ່ມີປະສິດທິພາບ

ກ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ສົນໃຈຄົນ

ຂ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ມີທັກສະໃນການບໍລິຫານງານ

ຄ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ສາມາດບັນລຸເປົ້າໝາຍໃນທາງປະລິມານໄດ້

ງ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ມີຄຸນສົມບັດໃນທາງທຳ

ຈ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ມີບຸກຄະລິກກະພາບ

ສ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຜູ້ທີ່ມີນິໄສປະຈຳຕົວທີ່ດີ

ຊ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ສາມາດບັນລຸເປົ້າໝາຍໃນທາງຄຸນນະພາບໄດ້

GCI

# I. ອາລຳພະບົດ

## *ກ. ຄວາມສຳຄັນຂອງຜູ້ນຳ*

ຈອນ ບານາ ໄດ້ເນັ້ນຄວາມສຳຄັນຂອງການເປັນຜູ້ນຳໄວ້ວ່າ

"ຫລັງຈາກທີ່ໄດ້ໃຊ້ເວລາໃນທົດສະວັດທີ່ຜ່ານມາທຳການສຶກສາພຶດຕິກຳອົງການ ແລະພະລັງຂອງ ງານພັນ ທະກິດ ແລ້ວ ຂ້າພະເຈົ້າເຊື່ອວ່າມີກຸນແຈບາງປະການທີ່ເຮັດໃຫ້ພັນທະກິດປະສົບຄວາມສຳເລັດລັກສະນະປະການນຶ່ງທີ່ບໍ່ປ່ຽນແປງໄປຕາມການເວລາຂອງພັນທະກິດທີ່ສາມາດປ່ຽນຊີວິດຜູ້ຄົນໄດ້ກໍຄື ຜູ້ນຳ"

ອັກຄະສາວົກໂປໂລ ໜູນໃຈໃຫ້ເຮົາດຳເນີນຕາມແບບຢ່າງຂອງທ່ານ ໂດຍຂຽນໄວ້ວ່າ
**1ໂກຣິນໂທ11:1** "ທ່ານຈົ່ງປະພຶດຕາມແບບຢ່າງຂ້າພະເຈົ້າ ເຊັ່ນດຽວກັບທີ່ຂ້າພະເຈົ້າປະພຶດຕາມແບບຢ່າງພະຄຣິດ"

## *ຂ. ຄຳນິຍາມ*

ຄຳວ່າຜູ້ນຳ ມີຄວາມໝາຍຫລາຍຢ່າງ ແລ້ວແຕ່ແງ່ມຸມຂອງການສຶກສາ

1. ຜູ້ນຳຄືໃຜ?

   ລັກສະນະບາງປະການຂອງຜູ້ນຳ

   ກ) ຜູ້ນຳຄື ຜູ້ທີ່ນຳທາງ ແລະຊີ້ທາງ

   ຂ) ຜູ້ນຳມີສິດທິອຳນາດ ແລະພະລັງ

   ຄ) ຜູ້ນຳມີຜູ້ຕິດຕາມ

   ງ) ຜູ້ນຳຄືຜູ້ທີ່ສາມາດສ້າງແຮງບັນດານໃຈໃຫ້ຜູ້ທີ່ຕິດຕາມເຂົາ ເພື່ອໃຫ້ບັນລຸເປົ້າໝາຍ ຫລື ວັດຖຸປະສົງທີ່ຕ້ອງການ

   ຈ) ອອບຣີ ມັດເຟອ ໄດ້ນິຍາມຄຳວ່າ ຜູ້ນຳຄຣິສຕຽນໄວ້ວ່າ "..ຄົນທີ່ມີທຳ(ຄຸນລັກສະນະ) ຊຶ່ງຮູ້ວ່າຕົນເອງກຳລັງມຸ້ງໄປທາງໃດ(ນິມິດ) ແລະມີຜູ້ຕິດຕາມເຂົາໄປ(ອິດທິພົນ)"

   ສ) ເຫັດ ອີ ອົງສະຕອນ ແລະເອັດວາ ອາຣ ເດຍຕັນ ໄດ້ນິຍາມວ່າ ຜູ້ນຳຄຣິສຕຽນ ໄວ້ດັ່ງຕໍ່ໄປນີ້ "..ຜູ້ນຳມີແຮງບັນດານໃຈຄືຄວາມຮັກ ແລະຫຸ້ມເທໃນການຮັບໃຊ້ ຜູ້ນຳເປັນຜູ້ທີ່ຍອມຢູ່ໃຕ້ບັງຄັບຂອງພະຄຣິດ ແລະດຳເນີນຕາມແບບຢ່າງຂອງພະອົງ"

2. ແງ່ມຸມອື່ນໆ ໃນການເປັນຜູ້ນຳ

   ກ) ຜູ້ນຳເກີດຈາກການສ້າງ ບໍ່ແມ່ນໂດຍການກຳເນີດ
   ປີເຕີ ດັດເກີ - ເຂົາບໍ່ເຄີຍພົບຜູ້ບໍລິຫານທີ່ມີປະສິດທິພາບມາຕັ້ງແຕ່ກຳເນີດແຕ່ລະຄົນຕ້ອງຮຽນຮູ້ເພື່ອເຮັດໃຫ້ຕົນເອງມີປະສິດທິພາບ
   ເປັນຄວາມຈິງທີ່ບາງຄົນເກີດມາພ້ອມກັບລັກສະນະຜູ້ນຳ ແຕ່ກໍຍັງຈຳເປັນຕ້ອງມີການສ້າງ ແລະຝຶກຝົນອົບຮົມ

GCI

ຂ) ຕຳແໜ່ງບໍ່ໄດ້ເຮັດໃຫ້ໃຜເປັນຜູ້ນຳ

ມີບາງຄົນທີ່ໄດ້ຮັບການແຕ່ງຕັ້ງໃນຕຳແໜ່ງຜູ້ນຳ ແຕ່ບໍ່ສາມາດເຮັດໜ້າ ທີ່ຕາມບົດບາດທີ່ໄດ້ຮັບມອບໝາຍໃຫ້ ດັ່ງນັ້ນການມອບຕຳແໜ່ງຜູ້ນຳໃຫ້ແກ່ໃຜ ຍ່ອມບໍ່ເຮັດໃຫ້ເຂົາ ເປັນຜູ້ນຳຂຶ້ນມາໄດ້ ຂໍ້ສັງເກດໃນເລື່ອງນີ້ເປັນຄວາມຈິງໃນງານຂອງຄຣິສຕະຈັກ ມີຫລາຍຄົນທີ່ຖືກເອີ້ນວ່າ "ສິດຍາພິບານ" ຫລື "ສາດສະໜາຈານ" ແຕ່ບໍ່ສາມາດເທດສະໜາພະວັດຈະນະຂອງພະເຈົ້າໃຫ້ແກ່ຄົນໃນຄຣິສຕະຈັກ

## II. ບຸກຄະລິກລັກສະນະ 7 ປະການຂອງຜູ້ນຳທີ່ມີປະສິດທິພາບ

### ກ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ມີທັກສະໃນເລື່ອງຄົນ

ທັກສະໃນການຕິດຕໍ່ກັບຜູ້ຄົນຖືວ່າເປັນອົງປະກອບສຳຄັນຍິ່ງໃນການເປັນຜູ້ນຳທີ່ມີປະສິດທິພາບ ມີການຕັ້ງຂໍ້ສັງເກດວ່າຜູ້ນຳທີ່ມີປະສິດທິພາບນັ້ນຮູ້ເຖິງຄວາມສຳຄັນຂອງການສ້າງຄວາມສຳພັນກັບຜູ້ອື່ນ

ສະຕີເຟນ ໂຄວີ ຕັ້ງຂໍ້ສັງເກດໄວ້ວ່າ ຜູ້ນຳທີ່ມີປະສິດທິພາບນັ້ນ

- ພະຍາຍາມທີ່ຈະເຂົ້າໃຈຄົນອື່ນ ກ່ອນທີ່ຈະໃຫ້ຄົນອື່ນເຂົ້າໃຈຕົນເອງ
- ສາຍພະລັງໃນແງ່ບວກອອກມາ ແລະເຊື່ອໃນສ່ວນດີຂອງຄົນອື່ນ
- ດຳເນີນຕາມຫລັກການຊຶ່ງເນັ້ນການປັ້ນນິບັດຮັບໃຊ້

ໂປໂລເປັນຜູ້ນຳທີ່ຫ່ວງໃຍບັນດາຄົນທີ່ຕິດຕາມທ່ານ ໂຄວີ ກ່າວວ່າ ໂປໂລຄືຜູ້ນຳທີ່ມີປະສິດທິພາບຊຶ່ງ "ພະຍາຍາມເຂົ້າໃຈຄົນອື່ນ ກ່ອນທີ່ຈະໃຫ້ຜູ້ອື່ນເຂົ້າໃຈຕົວເອງ" ແລະ "ເປັນຜູ້ທີ່ເຊື່ອໃນສ່ວນດີຂອງຄົນອື່ນ"

ຄຳສັ່ງສອນຂອງໂປໂລໃນ**ຟີລິບບອຍ 2:4** ຊີ້ໃຫ້ເຫັນວ່າທ່ານພະຍາຍາມທີ່ຈະເຂົ້າໃຈຄົນອື່ນກ່ອນສະເໝີ" "ຢ່າໃຫ້ຕ່າງຄົນຕ່າງເຫັນແກ່ປະໂຫຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປະໂຫຍດຂອງຄົນອື່ນໆດ້ວຍ"

ຕໍ່ໄປນີ້ຄືລັກສະນະຂອງຜູ້ນຳຊຶ່ງເປັນຜູ້ທີ່ມີທັກສະໃນການປະຕິບັດຕໍ່ຄົນ

1. **<u>ອາລົມດີ</u>**

**ສຸພາສິດ 17:22** ບອກເຮົາໄວ້ວ່າ "ໃຈລ່າເລີງເປັນຢາຢ່າງດີ ແຕ່ຈິດໃຈທີ່ໝົດມານະເຮັດໃຫ້ກະດູກແຫ້ງ" ເຖິງແມ່ນອາລົມລ່າເລີງຈະເປັນລັກສະນະທີ່ສຳຄັນຂອງຜູ້ນຳ ແຕ່ເຮົາຕ້ອງລະມັດລະວັງໃນການໃຊ້ນຳການ ຈະໃຊ້ອາລົມລ່າເລີງໃຫ້ໄດ້ຜົນດີຕ້ອງຂຶ້ນຢູ່ກັບສະຖານະການດ້ວຍ ອາລົມລ່າເລີງຈະຊ່ວຍໄດ້ດີໃນການແກ້ໄຂບັນຍາກາດທີ່ຕຶງຄຽດບໍ່ໄດ້ບັນທຶກໄວ້ໃນພະຄຳພີວ່າໂປໂລເປັນຜູ້ມີອາລົມລ່າເລີງຫລາຍ

ແຕ່ການທີ່ພະຄຳພີບໍ່ໄດ້ບັນທຶກໄວ້ກໍບໍ່ໄດ້ໝາຍຄວາມວ່າໂປໂລເປັນຄົນທີ່ບໍ່ມີອາລົມລ່າເລີງ ໃນ**ເອເຟໂຊ 5:4** ໂປໂລເຕືອນໃຫ້ລະວັງການເວົ້າຫລິ້ນບໍ່ເປັນແກ່ນສານ "ທັງຢ່າເວົ້າຫຍາບຄາຍເວົ້າຫລິ້ນບໍ່ມີແກ່ນສານ

GCI

## 2. <u>ມີຄວາມຄິດໃນແງ່ບວກ</u>

ຈຳເປັນຢ່າງຍິ່ງທີ່ຜູ້ນຳຈະຕ້ອງເປັນຜູ້ມີຄວາມຄິດໃນແງ່ບວກ ຖ້າເຂົາຕ້ອງການເປັນຜູ້ທີ່ມີປະສິດທິພາບ

ໂປໂລໜູນໃຈໃຫ້ຜູ້ເຊື່ອຮູ້ຈັກຄວບຄຸມຄວາມຄິດຈິດໃຈຂອງເຂົາ "ເບິ່ງກ່ອນພີ່ນ້ອງທັງຫລາຍໃນທີ່ສຸດນີ້ຂໍຈົ່ງຕຶກຕອງເຖິງສິ່ງທີ່ຈິງ ສິ່ງທີ່ໜ້ານັບຖື ສິ່ງທີ່ຍຸດຕິທຳ ສິ່ງທີ່ບໍລິສຸດ ສິ່ງທີ່ໜ້າຮັກ ສິ່ງທີ່ຊົງຄຸນ ຄືຖ້າມີສິ່ງໃດທີ່ລ້ຳເລີດ ສິ່ງໃດທີ່ຄວນແກ່ການສັນລະເສີນ ກໍຂໍຈົ່ງໃຄ່ຄວນ" **ຟີລິບບອຍ4:8**

ໜັງສືຟີລິບບອຍມີຂໍ້ບົ່ງຊີ້ຫລາຍປະການເຮັດໃຫ້ເຮົາເຫັນວ່າ ໂປໂລເປັນຜູ້ນຳທີ່ມີ ທັດສະນະຄະຕິໃນແງ່ບວກ ແມ່ນຂະນະທີ່ຢູ່ຄຸກ ທ່ານຍັງສາມາດມີໃຈຮູ້ສຶກຂອບພະຄຸນພະເຈົ້າ "ຂ້າພະເຈົ້າຮູ້ສຶກຂອບພະຄຸນພະເຈົ້າທຸກຄັ້ງທີ່ລະລຶກເຖິງທ່ານ" ການທີ່ທ່ານມີໃຈຊື່ນຊົມຍິນດີ ເຮັດໃຫ້ເຮົາເຫັນເຖິງທັດສະນະຄະຕິໃນແງ່ບວກຂອງທ່ານ "ຈົ່ງຊື່ນຊົມຍິນດີໃນອົງພະຜູ້ເປັນເຈົ້າທຸກເວລາ ຂ້າພະເຈົ້າຢ້ຳອີກວ່າ ຈົ່ງຊື່ນຊົມຍິນດີເຖີດ" **ຟີລິບບອຍ4:4** ໃນຂະນະທີ່ຢູ່ໃນຄຸກອັນມືດມິດ ຄວາມຄິດໃນແງ່ບວກຂອງໂປໂລໄດ້ສ່ອງສະຫວ່າງອອກມາຢ່າງຊັດເຈນ

ແນວຄິດຂອງໂປໂລ ບໍ່ໄດ້ຢຸດຢູ່ພຽງແຕ່ການມີຄວາມຄິດໃນແງ່ບວກເທົ່ານັ້ນ ແຕ່ທ່ານເນັ້ນວ່າຄວາມຄິດຂອງເຮົານັ້ນຕ້ອງຢູ່ໃຕ້ບັງຄັບຂອງພະຄຣິດ ການສົ່ງເສີມໃຫ້ຄົນມີຄວາມ ຄິດໃນແງ່ບວກຕາມແບບສະໄໝໃໝ່ທີ່ວ່າ "ຂ້ອຍເຮັດໄດ້" ນັ້ນຍ່ອມຂັດກັບຄຳສອນຂອງໂປໂລທີ່ວ່າ "ຂ້າພະເຈົ້າປະເຊີນທຸກສິ່ງໄດ້ ໂດຍພະອົງຜູ້ຊົງເສີມກຳລັງຂ້າພະເຈົ້າ" **ຟີລິບບອຍ 4:13**

ຜູ້ນຳທີ່ມີປະສິດທິພາບເປັນຜູ້ທີ່ມີຄວາມຄິດໃນແງ່ບວກ ແລະເຂົາຈະເສີມສ້າງໃນສ່ວນ ທີ່ເປັນຈຸດແຂງຂອງຜູ້ອື່ນ

ໂປໂລ ຈະເສີມສ້າງສ່ວນທີ່ເປັນຈຸດແຂງຂອງຜູ້ອື່ນສະເໝີ
ຕົວຢ່າງ ການທີ່ທ່ານປະຕິບັດຕໍ່ຕີໂມທຽວ ການທີ່ທ່ານປະຕິບັດຕໍ່ຄຣິສຕະຈັກທີ່ເມືອງໂກຣິນໂທ

ກ) ເຂົາເສີມສ້າງໃນສ່ວນທີ່ເປັນຈຸດແຂງຂອງ<u>**ຕົນເອງ**</u>
ຂ) ຈຸດແຂງຂອງຜູ້**ບັງຄັບບັນຊາ**
ຄ) ຈຸດແຂງຂອງເພື່ອນ<u>**ຮ່ວມງານ**</u>
ງ) ຈຸດແຂງຂອງ**ຜູ້<u>ໃຕ້ບັງຄັບບັນຊາ</u>**
ໂຢນາທານປະຕິບັດຕໍ່ດາວິດ **1ຊາມູເອນ 20**
ຈ) ຈຸດແຂງຂອງ<u>**ສະຖານະການ**</u>

ໂປໂລໄດ້ເນັ້ນໃນຈຸດແຂງຂອງສະຖານະການໃນເມືອງໂກຣິນໂທ ຄວາມຈິງທ່ານຈະເພັ່ງເລັງ ທີ່ຈຸດອ່ອນຂອງພະພວກເຂົາ ເຊັ່ນ: ການແຕກແຍກ ການຂາດລະບຽບ ແລະການຜິດສິນລະທຳກໍໄດ້ ແຕ່ກົງກັນຂ້າມ ທ່ານເບິ່ງເລີຍບັນຫາຂອງພວກເຂົາອອກໄປ ແລະສອນໃຫ້ພວກເຂົາຮູ້ເຖິງວິທີເອົາຊະນະຄວາມອ່ອນແອເຫລົ່ານີ້

GCI

3. **<u>ຮູ້ຈັກຍຶດຫຍຸ່ນ</u>**

ໃນຈຸດນີ້ ເຮົາຈະພິຈາລະນາເຖິງການຮູ້ຈັກຍຶດຫຍຸ່ນໃນຖານະທີ່ເປັນຄຸນລັກສະນະຂອງຜູ້ນຳໃນແງ່ທີ່ເຂົາພ້ອມທີ່ຈະປັບປຽນຮູບແບບການນຳຂອງເຂົາໃຫ້ເຂົ້າກັບຜູ້ຄົນທີ່ຢູ່ລ້ອມຮອບ

ຜູ້ນຳທີ່ຮູ້ຈັກຍຶດຫຍຸ່ນມີຂໍ້ໄດ້ປຽບເພາະເຂົາຈະເປັນທີ່ນິຍົມຂອງຜູ້ຕິດຕາມໂດຍສະເພາະຢ່າງຍິ່ງເມື່ອເຂົາຍອມທີ່ຈະປັບປຽນວິທີການຂອງຕົນເພື່ອໃຫ້ເປັນໄປຕາມຄຳຂໍຮ້ອງຂອງຜູ້ຕິດຕາມ ແນ່ນອນຜູ້ນຳຍ່ອມບໍ່ອາດຈະຍຶດຫຍຸ່ນຫລາຍເກີນໄປ ຈົນເຮັດໃຫ້ຄຣິສຕະຈັກຂາດລະບຽບ

ແຊນເຕີ ສະແດງຄວາມຄິດເຫັນໃນເລື່ອງຄວາມຍຶດຫຍຸ່ນຂອງໂປໂລໄວ້ວ່າ

ບາງຄັ້ງໂປໂລສະແດງຄວາມໃຈດີແລະຄວາມເປັນພໍ່ "ແຕ່ວ່າເຮົາຢູ່ໃນໝູ່ພວກທ່ານ ດ້ວຍຄວາມ ສຸພາບອ່ອນໂຍນ ເໝືອນພີ່ລ້ຽງທີ່ລ້ຽງດູລູກຂອງຕົນ" **(1ເທຊະໂລນິກ2:7–8,11–12)** ແຕ່ເມື່ອມີຄວາມຈຳເປັນໂປໂລປະກາດກ້ອງວ່າ "ຂ້າພະເຈົ້າໄດ້ເຕືອນທ່ານທີ່ເຮັດບາບມາແລ້ວ ແລະບັນດາຄົນອື່ນໆດ້ວຍ ແລະບັດນີ້ຂ້າພະເຈົ້າຂໍເຕືອນທ່ານອີກ ເມື່ອຂ້າພະເຈົ້າບໍ່ໄດ້ຢູ່ກັບທ່ານຄືກັບເມື່ອຂ້າພະເຈົ້າໄດ້ຢູ່ກັບທ່ານໃນຄັ້ງທີສອງນັ້ນວ່າ ຖ້າຂ້າພະເຈົ້າມາອີກຂ້າພະເຈົ້າຈະບໍ່ເວັ້ນການຕີໂທດຄົນເຫລົ່ານີ້ເລີຍ" 2ໂກຣິນໂທ 13:2

4. **<u>ຮູ້ສຶກໄວ</u>**ຕໍ່ຄວາມຕ້ອງການຂອງຜູ້ອື່ນ

ຜູ້ນຳທີ່ໄວຕໍ່ຄວາມຕ້ອງການຂອງຜູ້ຕິດຕາມຈະເປັນແຮງຈູງໃຈທີ່ດີສຳລັບພວກເຂົາ ຜູ້ນຳທີ່ມີປະສິດທິພາບນັ້ນພະຍາຍາມທີ່ຈະເຂົ້າໃຈຜູ້ອື່ນກ່ອນທີ່ຈະໃຫ້ຜູ້ອື່ນເຂົ້າໃຈຕົນເອງ ຄົນເຮົາມັກທີ່ຈະໃຫ້ຜູ້ອື່ນເຂົ້າໃຈຕົນເອງສະເໝີຖ້າທ່ານມີຫູທີ່ພ້ອມຈະຟັງສຽງຂອງຜູ້ຕິດຕາມທ່ານກໍຈະເປັນຜູ້ນຳທີ່ມີປະສິດທິ ພາບ

ການທີ່ໂປໂລມີຄວາມຮູ້ສຶກໄວຕໍ່ຄວາມຕ້ອງການຂອງຜູ້ເຊື່ອທີ່ເມືອງໂກຣິນໂທໂດຍສະເພາະຢ່າງຍິ່ງເລື່ອງການກັບໃຈໃຫມ່ຂອງພີ່ນ້ອງຄົນນຶ່ງທີ່ເຄີຍລ່ວງປະເວນີນັ້ນ ປາກົດຊັດໃນ **2ໂກຣິນໂທ2:4–8** "ເພາະວ່າຂ້າພະເຈົ້າຂຽນໜັງສືເຖິງທ່ານເພາະຂ້າພະເຈົ້າມີຄວາມທຸກລະທົມໃຈຫລາຍ ແລະນ້ຳຕາໄຫລ ບໍ່ແມ່ນເພື່ອຈະເຮັດໃຫ້ທ່ານເປັນທຸກ

ການທີ່ໂປໂລໜູນໃຈຕີໂມທຽວຊຶ່ງເປັນຄົນຂີ້ອາຍຢ່າງອ່ອນໂຍນນັ້ນ ເຮັດໃຫ້ເຮົາເຫັນເຖິງການໄວຕໍ່ຄວາມຮູ້ສຶກຂອງທ່ານ ຄົນອື່ນອາດຈະຕຳນິຕີໂມທຽວທີ່ປະຖິ້ມຂອງປະທານຂອງພະເຈົ້າໃນຊີວິດແຕ່ໂປໂລບໍ່ໄດ້ເຮັດແບບນັ້ນ "ອັນຂອງປະທານຂອງພະເຈົ້າຊຶ່ງມີຢູ່ໃນທ່ານ ໂດຍທີ່ຂ້າພະເຈົ້າໄດ້ເອົາມືວາງເທິງທ່ານນັ້ນ ຂໍເຕືອນວ່າທ່ານຈົ່ງກະທຳໃຫ້ຮຸ່ງເຮືອງຂຶ້ນ ເພາະວ່າພະເຈົ້າບໍ່ໄດ້ຊົງປະທານຈິດທີ່ຢ້ານກວາໃຫ້ເຮົາ ແຕ່ໄດ້ຊົງປະທານຈິດທີ່ປະກອບດ້ວຍລິດ ຄວາມຮັກ ແລະການຮູ້ຈັກບັງຄັບຕົນໃຫ້ແກ່ເຮົາ" **2ຕີໂມທຽວ 1:6–7**

ການທີ່ໂປໂລແກ້ບັນຫາຄວາມຂັດແຍ້ງໃນໂຣມກ່ຽວກັບການຖືຮັກສາວັນພິເສດຕ່າງໆ ແລະການງົດເວັ້ນອາຫານບາງຊະນິດ ສະທ້ອນໃຫ້ເຫັນເຖິງການໄວຕໍ່ຄວາມ ຮູ້ສຶກຂອງທ່ານ ໃນເລື່ອງຈິດສຳນຶກຂອງຄົນອື່ນໆ

GCI

5. ໃຊ້ອຳນາດ**ຢ່າງມີບັນຫາ**

ຜູ້ນຳຕ້ອງຮູ້ຈັກໃຊ້ອຳນາດຢ່າງມີບັນຫາ ພະຄຳພີກ່າວໄວ້ຢ່າງຊັດເຈນວ່າ ຜູ້ນຳຈະຕ້ອງບໍ່ໃຊ້ອຳນາດໃນການກົດຂີ່ຫລືສະແດງຄວາມເປັນເຈົ້ານາຍເໝືອນຄົນອື່ນ
"ຈົ່ງລ້ຽງຝູງແກະຂອງພະເຈົ້າທີ່ຢູ່ໃນຄວາມດູແລຂອງທ່ານ ບໍ່ແມ່ນດ້ວຍຄວາມຝືນໃຈ ແຕ່ດ້ວຍຄວາມເຕັມໃຈ ບໍ່ແມ່ນດ້ວຍການເຫັນແກ່ຊັບສິ່ງຂອງທີ່ໄດ້ມາໂດຍບໍ່ສັດຊື່ ແຕ່ດ້ວຍໃຈເຫລື້ອມໃສ ແລະບໍ່ແມ່ນຄືເປັນເຈົ້ານາຍທີ່ຂົ່ມຂູ່ຜູ້ທີ່ຢູ່ໃຕ້ອຳນາດ ແຕ່ເປັນແບບຢ່າງແກ່ຝູງແກະນັ້ນ" **1ເປໂຕ 5:2-3**
ການໃຊ້ອຳນາດຢ່າງຜິດໆຈະເຮັດໃຫ້ຜູ້ຕິດຕາມສູນເສັຽຄວາມໄວ້ໃຈ ແລະໝົດຄວາມຈົງຮັກພັກດີຕໍ່ຜູ້ນຳ

ໂປໂລເປັນຜູ້ທີ່ປະກອບດ້ວຍອຳນາດ ແລະລິດເດດ ໃນເລື່ອງຝ່າຍວິນຍານນັ້ນໂປໂລ ມີການຊົງເຈີມໃນລິດເດດ"ເຂົາເອົາຜ້າເຊັດໜ້າກັບຜ້າກັນເປື້ອນຈາກຕົວໂປໂລໄປວາງໃສ່ຄົນປ່ວຍໄຂ້ໂລກນັ້ນກໍຫາຍ ແລະຜີຮ້າຍກໍອອກຈາກຄົນ" **ກິດຈະການ19:11**

ໃນຖານະທີ່ເປັນອັກສາວົກຄົນນຶ່ງບໍ່ໄດ້ໃຊ້ລິດເດດ ແລະອຳນາດຢ່າງຜະເດັດການ ແຕ່ໃຊ້ຢ່າງມີບັນຍາ "ເຮົາບໍ່ແມ່ນເປັນນາຍບັງຄັບຄວາມເຊື່ອຂອງພວກທ່ານ ແຕ່ວ່າເຮົາເປັນຜູ້ອຸປະກະລະ"

2ໂກຣິນໂທ 1:24

ແຕ່ເມື່ອເຖິງຄາວທີ່ທ່ານຈຳເປັນຕ້ອງໃຊ້ສິດທິອຳນາດ ໂປໂລກໍບໍ່ຢ້ານ.. ຄາລາເຕັຽ 2:11

6. ຮັບມືກັບ**ຄຳວິຈານໄດ້**

ຄວາມສາມາດທີ່ຈະຮັບມືຄຳວິຈານໄດ້ນັ້ນ ຄືອົງປະກອບທີ່ສຳຄັນຂອງການເປັນຜູ້ນຳ **ສຸພາສິດ 9:8** ບອກເຮົາວ່າຜູ້ທີ່ມີປັນຍາ ຍອມຮັບຟັງໄດ້ແມ່ນແຕ່ຄຳຕຳນິ ຜູ້ນຳທີ່ສາມາດຮຽນຮູ້ຈາກຄຳວິພາກ ວິຈານຂອງຄົນອື່ນຈະເປັນຜູ້ນຳທີ່ມີປະສິດທິພາບເພີ່ມຂຶ້ນຢ່າງແນ່ນອນ

ຜູ້ນຳທີ່ມີທັກສະໃນການປະຕິບັດຕໍ່ຄົນຈະຕ້ອງສາມາດຮັບມືກັບຄຳວິພາກວິຈານໄດ້ ຖ້າຜູ້ນຳອ່ອນໄຫວ ແລະສະດຸດງ່າຍເມື່ອມີຄົນວິຈານເຂົາຈະມີຄວາມຫຍຸ້ງຍາກເວລາທີ່ຕ້ອງກ່ຽວຂ້ອງກັບຜູ້ຕິດຕາມຂອງເຂົາ

ໃນຖານະຜູ້ນຳຄົນນຶ່ງ ໂປໂລກໍບໍ່ພົ້ນຈາກການຖືກວິຈານ ມີບາງຄົນຕັ້ງຂໍ້ສົງໄສໃນທ່າທີ ແລະງານຮັບໃຊ້ຂອງທ່ານ ເຄນ ເນທ ເອຟ. ດັບເບີນຢູ. ໄດ້ຕັ້ງຂໍ້ສັງເກດໄວ້ວ່າ..

ເຮົາໄດ້ອ່ານເຖິງການທີ່ໂປໂລກ່າວແກ້ໃນເລື່ອງທີ່ທ່ານບໍ່ໄດ້ໄປຢ້ຽມພວກເຂົາ **2ໂກຣິນໂທ1:15-17** - ເລື່ອງນີ້ຟັງເບິ່ງຄຸ້ນໆ ສຳລັບພວກເຮົາຫລາຍຄົນ ແລະທ່ານຍັງຕ້ອງຮັບມືກັບຂໍ້ສົງໄສຕໍ່ກໍລະນີການດູແລເງິນຖະຫວາຍຂອງທ່ານ **2ໂກຣິນໂທ 12:14-18**

ໃນສະຖານະການທີ່ຕ້ອງປະເຊີນກັບການວິພາກວິຈານທີ່ຈ້ອງຈະທຳລາຍລ້າງກັນເຊັ່ນນັ້ນ
ເຮົາບໍ່ເຫັນວີ່ແວວແຫ່ງຄວາມຂົມຂື່ນໃດໆ ເລີຍໃນໂປໂລ ທ່ານຕອບສະໜອງ "ໂດຍຄວາມອ່ອນໂຍນ ແລະພະໄທກະລຸນາຂອງພະຄຣິດ" **2ໂກຣິນໂທ10:1** ແລະອະທິບາຍໃຫ້ຜູ້ເຊື່ອ ທັງຫລາຍຟັງດ້ວຍເຫດແລະຜົນ

GCI

ໂປໂລບໍ່ໄດ້ນິ້ງງຽບເມື່ອເຂົາຕັ້ງຂໍ້ສົງໃສໃນສິດທິອຳນາດແຫ່ງການເປັນອັກຄະສາວົກຂອງທ່ານ **2ໂກຣິນໂທ11** ໂປໂລກ່າວປົກປ້ອງຄວາມເປັນອັກຄະສາວົກຂອງທ່ານໄດ້ຢ່າງໜັກແໜ້ນ

7. ພັນທະນາ**<u>ມິດຕະພາບ</u>**

ໂປໂລມີຄວາມສາມາດທີ່ຈະຜູກມິດ ເພື່ອນຂອງທ່ານບາງຄົນພ້ອມທີ່ຈະສະລະຊີວິດເພື່ອທ່ານໂປໂລ ຄົງຈະເປັນທີ່ໄວ້ວາງໃຈ ແລະມີມິດຕະພາບອັນດີກັບຜູ້ນຳຄຣິສຕະຈັກໃນເມືອງອັນຕີໂອເຊັຽເປັນຢ່າງຫລາຍຈົນພວກເຂົາຕົກລົງໃຈແຕ່ງຕັ້ງທ່ານ ແລະບາລານະບັດໄວ້ເພື່ອງານພັນທະກິດ

**(ກິດຈະການ13:2-3)**

ປຣິນສິລາກັບອາດວິນລາ ເປັນສ່ວນນຶ່ງໃນບັນດາເພື່ອນສະໜິດຂອງໂປໂລ ຊຶ່ງເຮັດວຽກຮ່ວມກັບທ່ານຢ່າງໃກ້ຊິດ **(ກິດຈະການ 18:2-3,18)**

ໂປໂລຍັງມີເພື່ອນອີກຫລາຍຄົນທີ່ມີຕຳແໜ່ງສູງເຊັ່ນບາງຄົນທີ່ຢູ່ໃນເມືອງເອເຟໂຊ "ມີບາງຄົນໃນພວກສາດສະນາປະທານທີ່ປະຈຳແຄ້ວນເອເຊັຽ ຊຶ່ງເປັນສະຫາຍຂອງໂປໂລ"

**ກິດຈະການ 19:31**

ຈາກຂໍ້ຂຽນຂອງແຊນເດີ

ໂປໂລມີອັດຈະລິຍະພາບໃນການຜູກມິດ
"ບໍ່ມີໃຜໃນພັນທະສັນຍາໃຫມ່ທີ່ຈະສ້າງສັດຕູໄດ້ດຸຮ້າຍເທົ່າກັບໂປໂລ ແຕ່ມີນ້ອຍຄົນໃນໂລກທີ່ ໄດ້ພົບ

ມິດຕະພາບຂອງຜູ້ນຳ ສະທ້ອນໃຫ້ເຮົາເຫັນເຖິງບຸກຄະລິກກະພາບຂອງເຂົາ ຜູ້ນຳຈະຕ້ອງພັດທະນາບຸກຄະລິກກະພາບຂອງຕົນເພື່ອຈະມີສຳພັນທະພາບໃນສັງຄົມໄດ້ຢ່າງປະສົບຄວາມສຳເລັດ

ຄວາມຈິງຮັກພັກດີ ແລະການຍອມຮັບກັນ ຄືອົງປະກອບໃຫຍ່ສອງຢ່າງທີ່ຈຳ ເປັນຍິ່ງໃນການ ສ້າງມິດຕະພາບ ຖ້າຄົນໃດບໍ່ມີຄຸນລັກສະນະຊີວິດທີ່ດີເຂົາຍ່ອມມີອົງປະກອບ ທີ່ຈຳເປັນແກ່ການພັດທະນາສຳພັນທະພາບອັນດີໃນສັງຄົມຢູ່ໃນຕົວຢູ່ແລ້ວ

8. ຮູ້ຈັກສະແດງ**<u>ຄວາມປະທັບໃຈ</u>**ໃນເພື່ອນຮ່ວມງານ

ລັກສະນະຂໍ້ນີ້ມີສ່ວນຊ່ວຍຫລາຍໃນການເປັນຜູ້ນຳທີ່ມີປະສິດທິພາບ ຄົງບໍ່ມີໃຜຮູ້ສຶກເສັຽໃຈຖ້າມີຄົນມາສະແດງຄວາມປະທັບໃຈໃນງານທີ່ເຮົາເຮັດໄປ "ຄົນທຸກຄົນທຳງານໄດ້ດີຂື້ນເມື່ອ ເຂົາຮູ້ສຶກເປັນທີ່ຊື່ນຊອບ ແລະປະທັບໃຈຂອງຄົນອື່ນ ແລະເຂົາກໍຈະຮູ້ສຶກປະທັບໃຈຕໍ່ຄົນທີ່ໃຫ້ກຳລັງໃຈເຂົາຢ່າງແທ້ຈິງດ້ວຍ" ຄຳກ່າວຂອງບີເອລ ແລະອິງສະຕອມ

ໂປໂລຄືຜູ້ນຳທີ່ຮູ້ຈັກສະແດງຄວາມປະທັບໃຈຕໍ່ເພື່ອນຮ່ວມງານຂອງທ່ານ ໃນພະທຳ**ໂຣມ16** ໂປໂລໄດ້ສະແດງຄວາມປະທັບໃຈຕໍ່ບັນດາເພື່ອນຮ່ວມງານທີ່ໄດ້ມີສ່ວນຊ່ວຍເຫລືອທ່ານ ຂ້າພະເຈົ້າຂໍຝາກນ້ອງສາວຂອງເຮົາໄວ້ກັບທ່ານ ຄືເຟບີຜູ້ເປັນນັກຄະນາຍົກໃນຄຣິສຕະຈັກທີ່ຢູ່ໃນເມືອງເຄນເດັຽ ຂໍທ່ານຮັບນາງໄວ້ໃນພະນາມຂອງອົງພະຜູ້ເປັນເຈົ້າ ຕາມຄອນແກ່ທຳມິກະຊົນ ແລະຂໍໃຫ້ທ່ານຊ່ວຍນາງໃນທຸກສິ່ງທີ່ນາງຕ້ອງການ ເພາະນາງໄດ້ຊ່ວຍສົງເຄາະຄົນຫລາຍຄົນລວມທັງຂ້າພະເຈົ້າດ້ວຍ ຂໍຝາກຄວາມຄິດເຖິງມາຍັງປະລິດາ ແລະອາຄວິນລາ ຜູ້ຮ່ວມງານກັບຂ້າພະເຈົ້າໃນພະຣາຊະກິດຂອງພະເຢຊູຄຣິດ
**ໂຣມ 16:1-3**

GCI

9. **<u>ມີສິນລະປະໃນການເຈລະຈາ ແລະຮູ້ຈັກຜ່ອນໜັກຜ່ອນເບົາ</u>**

ຄວາມສາມາດແລະສິນລະປະໃນການເຈລະຈາຄືຄຸນລັກສະນະທີ່ເປັນປະໂຫຍດຢ່າງຍິ່ງຕໍ່ການເປັນຜູ້ນໍາ ບາງຄັ້ງຄວາມສໍາພັນຂອງເຮົາອາດແຫ້ງແລ້ງໄປເພາະການຂາດສິນລະປະໃນການເວົ້າ ການທໍາງານໃນຂະນະທີ່ຄວາມສໍາພັນແຫ້ງແລ້ງນັ້ນຍ່ອມມີຜົນຕໍ່ປະສິດທິພາບ ແລະປະສິດທິຜົນຂອງງານເຖິງແມ່ນຜູ້ນໍາຈະມີແຜນງານ ແລະນິມິດທີ່ດີແຕ່ຖ້າຂາດສິນລະປະໃນການເຈລະຈານິມິດນັ້ນກໍອາດຈະບໍ່ພົບຄວາມສໍາເລັດ ການຮູ້ຈັກເຈລະຈາ ແລະຜ່ອນໜັກຜ່ອນເບົາຈະເຮັດໃຫ້ຜູ້ນໍາເປັນຜູ້ທີ່ມີທັກສະໃນການຕິດຕໍ່ກັບຄົນ

ການທີ່ໂປໂລສາມາດຈັດການກັບເລື່ອງຂອງໂອເນສີມັດຊຶ່ງເປັນທາດທີ່ໜີໄປຈາກຟີເລໂມນຜູ້ເປັນເຈົ້ານາຍ ສະແດງໃຫ້ເຮົາເຫັນວ່າທ່ານເປັນຄົນທີ່ມີຄວາມສາມາດໃນການເຈລະຈາ ທ່ານເລີ່ມຕົ້ນໜັງສືທີ່ຂຽນເຖິງຟີເລໂມນດ້ວຍການຂອບຄຸນ ແລະສະແດງຄວາມຮູ້ສຶກປະທັບໃຈ "ນ້ອງເອີຍຄວາມຮັກຂອງທ່ານເຮັດໃຫ້ເຮົາມີຄວາມຍິນດີ ແລະເປັນສຸກຢ່າງຍິ່ງ ຈິດໃຈຂອງບັນດາທໍານິກະຊົນແຊ່ມຊື່ນຂຶ້ນເພາະທ່ານ " **ຟີເລໂມນ ຂໍ້ 7**

## ຂ. *ຜູ້ນໍາທີ່ມີປະສິດທິພາບຕ້ອງເປັນ**<u>ຄົນທີ່ມີທັກສະ</u>**ໃນການບໍລິຫານງານ*

ເຖິງແມ່ນທັກສະທາງດ້ານການບໍລິຫານງານຈະເປັນສິ່ງທີ່ມີຄວາມສໍາຄັນຕໍ່ປະສິດທິພາບຂອງງານແຕ່ກໍຍາກຈະເນັ້ນວ່າຄຣິສຕະຈັກບໍ່ແມ່ນແຕ່ອົງກອນບໍລິຫານຊຶ່ງຕ້ອງອາໄສພຽງແຕ່ການວາງແຜນ ແລະການບໍລິຫານງານທີ່ດີເທົ່ານັ້ນ ຄຣິສຕະຈັກເປັນຫລາຍກວ່າອົງການ ຄຣິສຕະຈັກຄືອົງກອນທີ່ມີຊີວິດເປັນຮ່າງກາຍຂອງພະຄຣິດ ເພາະເຫດທີ່ພະກາຍຂອງພະຄຣິດຄືຊຸມນຸມຊົນທີ່ມີກິດຈະກໍາຕ່າງໆຫລວງຫລາຍຜູ້ນໍາທີ່ມີທັກສະໃນການບໍລິຫານຍ່ອມສາມາດເສີມສ້າງປະສິດທິພາບ ແລະດໍາເນີນແຜນງານຂອງຄຣິສຕະຈັກໄດ້ໂດຍໃຫ້ມີຄວາມຮຽບຮ້ອຍຫລາຍທີ່ສຸດ

ໃນຖານະຜູ້ນໍາທີ່ມີປະສິດທິພາບ ໂປໂລໄດ້ສໍາແດງໃຫ້ເຮົາເຫັນເຖິງທັກສະໃນ ການບໍລິຫານຂອງທ່ານ ໄດ້ດ້ານຕ່າງໆດັ່ງຕໍ່ໄປນີ້

1. ມີ**<u>ການວາງແຜນ</u>**ທີ່ດີ

**ເຢເລມີ29:11** ບອກເຮົາວ່າພະເຈົ້າຊົງມີແຜນການທີ່ຈະເຮັດໃຫ້ປະຊາກອນຂອງພະອົງມີສະຫວັດດີພາບ

ມີຂໍ້ບົ່ງຊີ້ຫລາຍປະການໃນພະຄໍາພີ ທີ່ເຮັດໃຫ້ເຮົາເຫັນວ່າໂປໂລໄດ້ວາງແຜນການທໍາພັນທະກິດ ຂອງທ່ານໄວ້ ຕືອທ່ານເອງໄດ້ຢືນຢັນວ່າທ່ານໄດ້ "ແລ່ນແຂ່ງໂດຍມີເປົ້າໝາຍ" **1ໂກຣິນໂທ 9:26**

ການທີ່ໂປໂລເດີນທາງໄປຢ້ຽມຢາມເມືອງ ແລະທໍາມະສາລາຕ່າງໆຢູ່ຢ່າງຕໍ່ເນື່ອງ ເຮັດໃຫ້ເຮົາເຫັນວ່າທ່ານມີແຜນງານໃນການເຮັດພັນທະກິດ

ໂປໂລຢືນຢັນວ່າທ່ານໄດ້ວາງແຜນໄວ້ຫລາຍຄັ້ງແລ້ວທີ່ຈະໄປຢ້ຽມຢາມບັນດາຜູ້ເຊື່ອໃນກຸງໂຣມ "ພີ່ນ້ອງທັງຫລາຍຂ້າພະເຈົ້າຢາກໃຫ້ທ່ານທັງຫລາຍຮູ້ວ່າ ຂ້າພະເຈົ້າໄດ້ຕັ້ງໃຈ ໄວ້ຫລາຍຄັ້ງແລ້ວວ່າຈະມາຫາທ່ານ"**ໂຣມ 1:13**

GCI

ໂປໂລກ່າວກັບຊາວເມືອງໂກຣິນວ່າ ທ່ານໄດ້ວາງແຜນທີ່ຈະເດີນທາງໄປຢ້ຽມ ຢາມພວກເຂົາສອງຄັ້ງ **2ໂກຣິນໂທ 1:15–17**

2. ສ້າງຜູ້ນຳ**<u>ລຸ້ນໃຫມ່</u>**

ຜູ້ນຳຈະຕ້ອງມີການສ້າງຜູ້ນຳລຸ້ນໃຫມ່ຂຶ້ນມາເຮັດວຽກຕໍ່ ພະຄຳພີໄດ້ກ່າວເຖິງຄວາມສຳຄັນຂອງ ການເສີມສ້າງຜູ້ນຳ ເຊັ່ນ ໃນກໍລະນີຂອງໂມເຊ ຊຶ່ງໄດ້ສ້າງໂຢຊວຍເພື່ອເປັນຜູ້ນຳຕໍ່ຈາກທ່ານ **(ກັນດານວິຖີ 27:18)** ແລະເອລີຢາ ສ້າງເອລີຊາ ເພື່ອທຳງານຕໍ່ **(1ພົງກະສັດ 19:21)**

ຈອນ ແມກ ຊະແວວ ກ່າວໄວ້ວ່າ "ຜູ້ນຳທີ່ຝຶກສ້າງຜູ້ນຳລຸ້ນໃຫມ່ ຄືຜູ້ທີ່ທະວີຄູນປະສິດທິພາບໃນງານຂອງຕົນ"

ໂປໂລຄືຜູ້ທີ່ຄອຍສ້າງຄົນອື່ນຂຶ້ນມາເປັນຜູ້ນຳໃນຄຣິສຕະຈັກຂອງພະເຢຊູຄຣິດ ທ່ານກ່າວກັບຕີໂຕໄວ້ວ່າ "ເຫດທີ່ຂ້າພະເຈົ້າປະທ່ານໄວ້ທີ່ເກາະຄຣີດ ກໍເພື່ອທ່ານຈະໄດ້ແກ້ໄຂສິ່ງທີ່ຍັງບົກຜ່ອງໃຫ້ຮຽບຮ້ອຍ ແລະຕັ້ງຜູ້ປົກຄອງໄວ້ທຸກເມືອງທີ່ຂ້າພະເຈົ້າກຳຊັບທ່ານ" **ຕີໂຕ1:5**

ຕາມຄວາມເຫັນຂອງແຊນເດີ

ການຝຶກຝົນສ່ວນໃຫຍ່ທີ່ຕີໂມທຽວໄດ້ຮັບນັ້ນ ເປັນການຝຶກພາກສະໜາມຂະນະທີ່ຕ້ອງເດີນທາງ ຕາມໂປໂລໄປບ່ອນຕ່າງໆ ນັ້ນຖືວ່າເປັນສິດທິພິເສດຢ່າງຍິ່ງສຳລັບຄົນທີ່ອາຍຸນ້ອຍຫລາຍເຊັ່ນເຂົາ ການໄດ້ເດີນທາງຢ່າງນັ້ນເຮັດໃຫ້ເຂົາມີໂອກາດພົບປະກັບຜູ້ຄົນທຸກຮູບແບບ - ອາດເປັນຄົນລະດັບສູງ ຊຶ່ງບຸກຄະລິກກະພາບ ແລະຄວາມສຳເລັດຂອງເຂົາອາດເປັນແຮງກະຕຸ້ນ ໃຫ້ຕີໂມທຽວເກີດຄວາມ ທະເຍີທະຍານຢ່າງສ້າງສັນ ບໍ່ຕ້ອງສົງໄສເລີຍວ່າເຂົາໄດ້ຮຽນຮູ້ຈາກຄູຝຶກເຖິງວິທີທີ່ຈະເອົາຊະນະອຸປະສັກ ແລະວິກິດການຕ່າງໆ ຊຶ່ງເບິ່ງຄືຈະເກີດຂຶ້ນເປັນປົກກະຕິວິໄສໃສຊີວິດ ແລະງານຮັບໃຊ້ຂອງໂປໂລ

ແຊນເດີ ຕັ້ງຂໍ້ສັງເກດໄວ້ວ່າ "ມາດຕະຖານອັນເຂັ້ມງວດຂອງໂປໂລ ຄວາມຄາດຫວັງທີ່ສູງ ແລະຂໍ້ຮຽກຮ້ອງອັນໜັກນ່ວງກາຍເປັນເຄື່ອງມືທີ່ຈະຄັ້ນເອົາສິ່ງທີ່ດີທີ່ສຸດຈາກຕົວຕີໂມທຽວ ແລະອາດເປັນສິ່ງທີ່ຊ່ວຍໃຫ້ເຂົາກາຍເປັນຄົນທີ່ມີຄຸນນະພາບ

3. **ກ້າຕັດສິນໃຈ**

ຜູ້ນຳຕ້ອງມີຄວາມສາມາດໃນການຕັດສິນໃຈໂດຍບໍ່ດຶງເລື່ອງໃຫ້ລ້າຊ້າຢ່າງບໍ່ຈຳເປັນ ບໍ່ສະນັ້ນບັນຫາອາດລຸກລາມຈົນເຮັດໃຫ້ເລື່ອງຕ່າງໆ ຫຍຸ້ງຍາກຫລາຍຂຶ້ນ

ຜູ້ນຳທີ່ມີປະສິດທິພາບຍ່ອມຕັດສິນໃຈໄດ້ຢ່າງມີປະສິດທິພາບ ການທີ່ໂປໂລຕັດສິນໃຈຂັບພີ່ນ້ອງຄົນນຶ່ງໃນເມືອງໂກຣິນໂທອອກຈາກຄວາມສາມັກຄີທຳເພາະການລ່ວງປະເວນີ ແລະບໍ່ຍອມກັບໃຈໃຫມ່ນັ້ນສະແດງໃຫ້ເຫັນວ່າທ່ານເປັນຜູ້ນຳທີ່ມີປະສິດທິພາບ ທ່ານຕັດສິນໃຈທີ່ຈະຈັດການກັບເລື່ອງ ຂອງຊາຍຄົນນັ້ນ ເພາະຢ້ານວ່າເຫດການອາດຈະລຸກລາມອອກໄປເປັນຕົວຢ່າງໃຫ້ຄົນອື່ນໆເອົາແບບຢ່າງຄືເຂົາ ໂປໂລສະຫລຸບໄວ້ໃນ**1ໂກຣິນໂທ 15:13** ວ່າ "ທ່ານຈົ່ງກຳຈັດຄົນຊົ່ວເຊັ່ນນັ້ນອອກໄປຈາກພວກທ່ານເສັຽ

GCI

ແຊນເດີ ເຫັນວ່າການກ້າຕັດສິນໃຈ ຄືຈຸດເດັ່ນປະການນຶ່ງໃນການເປັນຜູ້ນໍາຂອງໂປໂລ:

ຄວາມໂລເລແລະການບໍ່ກ້າຕັດສິນໃຈ ເປັນສິ່ງທີ່ໂປໂລບໍ່ເຄີຍຮູ້ຈັກ..ເມື່ອຜູ້ນໍາທີ່ມີ ປະສິດທິພາບໄດ້ຮູ້ແນ່ ເຖິງນໍ້າພະໄທພະເຈົ້າແລ້ວ ເຂົາຈະລົງມືເຮັດການທັນທີໂດຍບໍ່ສົນໃຈວ່າຜົນຮັບຈະເປັນຢ່າງໃດ....ການ ຜັດວັນປະກັນພຸ່ງ ແລະຄວາມໂລເລ ເປັນອັນຕະລາຍຮ້າຍແຮງສໍາລັບຜູ້ນໍາ

**4. ພ້ອມທີ່ຈະປ່ຽນແປງ**

ເຮົາເບິ່ງຍ້ອນຫລັງທາງສາດສະໜາຢູດາຂອງໂປໂລ ການທີ່ທ່ານປ່ຽນຈາກຜູ້ຂົ່ມເຫງ ຄຣິສຕະຊົນມາ ເປັນນັກເທດນັ້ນຄືສິ່ງທີ່ຊີ້ໃຫ້ເຫັນວ່າ ທ່ານເປັນຄົນທີ່ພ້ອມທີ່ຈະປ່ຽນແປງ ຫລັງຈາກໄດ້ຮັບປະສົບ ການກັບພະເຈົ້າຂະນະເດີນທາງໄປເມືອງດາມັດສະກັດແລ້ວ ໂປໂລໄດ້ໃຊ້ເວລາອີກຫລາຍວັນຢູ່ກັບ ສາວົກໃນເມືອງດາມັດສະກັດ ແລະຫລັງຈາກນັ້ນທ່ານກໍເລີ່ມປະກາດພະວັດຈະນະໃນທັນທີ **(ກິດຈະການ 9:19-20)**

ເມື່ອໂປໂລກັບຄະນະກໍາລັງມຸ້ງໜ້າໄປຍັງເມືອງບີທີເນັຽ ຕາມແນວເຂດເມືອງມີເຊັຽນັ້ນ ພະວິນຍານ ໄດ້ຫ້າມບໍ່ໃຫ້ພວກເຂົາເຂົ້າໄປໃນເມືອງບີຊີເນັຽ ຕໍ່ມາພວກເຂົາຈຶ່ງປ່ຽນແຜນໂດຍມຸ້ງໜ້າໄປຍັງມາ ຊີໂດເນັຽແທນ **(ກິດຈະການ 16:6-10)**

ການທີ່ໂປໂລປ່ຽນທ່າທີຕໍ່ພີ່ນ້ອງທີ່ເຮັດບາບຄົນນຶ່ງ (2ໂກຣິນໂທ 2:6-7) ປຽບທຽບກັບທ່າທີອັນ ແຂງກ້າວກ່ອນໜ້ານີ້ (1ໂກຣິນໂທ 5:1-2) ຊີ້ໃຫ້ເຂົາເຫັນວ່າ ທ່ານເປັນຜູ້ທີ່ພ້ອມທີ່ຈະປ່ຽນແປງ

5. ສົ່ງເສີມໃຫ້ມີ<u>**ການທໍາງານເປັນທີມ**</u>

ຜູ້ນໍາຕ້ອງຮູ້ຈັກພັດທະນາໃຫ້ເກີດການທໍາງານຮ່ວມກັນເປັນທີມເພື່ອງານທີ່ມີປະສິດທິພາບ ພະເຈົ້າໄດ້ ຊົງສະແດງໃຫ້ໂມເຊເຫັນເຖິງພັນທະກິດໃນດ້ານນີ້ໃນພະທໍາ **ອົບພະຍົບ17:13-26** ພະທໍາຕອນນີ້ ອະທິບາຍໃຫ້ເຮົາເຫັນຢ່າງຊັດເຈນວ່າເປັນຄວາມໂງ່ພຽງໃດທີ່ຄົນຄົນດຽວຈະພະຍາຍາມເຮັດວຽກທຸກຢ່ າງໃຫ້ສໍາເລັດສິ້ນພຽງລໍາພັງຕົນເອງ

**ພະຄໍາພີໜູນໃຈໃຫ້ເຮົາຮູ້ຈັກທໍາງານເປັນທີມ** ດັ່ງທີ່ປາກົດໃນ **ປັນຍາຈານ4:9,12** "ສອງຄົນ ດີກວ່າຄົນດຽວ ເພາະວ່າເຂົາທັງສອງໄດ້ຮັບຜົນຂອງງານດີ..ແມ່ນຄົນນຶ່ງສູ້ຄົນດຽວໄດ້ສອງຄົນຄົງ ສູ້ເຂົາໄດ້ແນ່ ເຊືອກສາມກຽວຈະຂາດງ່າຍກໍບໍ່ໄດ້"

ໂປໂລຖືກສົ່ງຈາກເມືອງອັນຕີໂອອອກໄປທໍາພັນທະກິດພ້ອມກັບບາລານະບັດ "ຝ່າຍທັງສອງ (ບາລາ ນະບັດກັບໂປໂລ) ຊຶ່ງໄດ້ຮັບໃຊ້ຈາກອົງພະວິນຍານບໍລິສຸດ ຈຶ່ງລົງໄປຍັງເມືອງເຊລູເດັຽ ແລະຈາກທີ່ນັ້ນ ໄດ້ແລ່ນເຮືອຕໍ່ໄປຍັງເກາະໄຊປັດ" **(ກິດຈະການ13:4)**

ໂປໂລບໍ່ແມ່ນທີ່ທໍາງານຕາມລໍາພັງ ແຕ່ຮ່ວມທໍາງານດ້ວຍກັນກັບຄົນອື່ນໆ ໄດ້ແກ່

ກ) ທີມງານເລີ່ມແລກປະກອບດ້ວຍ **ບາລານາບັດ ແລະໂປໂລ ກິດຈະການ 11:22-30**

ຂ) ໃນການເດີນທາງກໍ່ຕັ້ງຄຣິສຕະຈັກຖ້ຽວທໍາອິດນັ້ນ ໂປໂລໄດ້ນໍາມາຣະໂກເຂົ້າຮ່ວມທີມ ດ້ວຍ **ກິດຈະການ 13:2-3,5**

GCI

ຄ) ການເດີນທາງຖ້ຽວທີ່ສອງ ມີສີລາ **(ກິດຈະການ 15:40)**,

ຕີໂມທຽວ **(ກິດຈະການ16)**,

ລູກາ **ກິດຈະການ 16**

ແລະ ຄົນອື່ນໆອີກ **(ກິດຈະການ 18)**

ງ) ສຸດທ້າຍມີຄົນອື່ນໆທີ່ຮ່ວມຕໍ່ກັນທຳງານໃນທີມໃຫມ່ໆ **(ກິດຈະການ 19:20)**

ຈ) ໂອເນສີໂຟຣັດ ຊຶ່ງຊ່ອຍເຮັດໃຫ້ຊື່ນໃຈເລື້ອຍໆ **2ຕີໂມທຽວ 1:16**

ສ) ຟີບີ ຊຶ່ງມີສ່ວນເຫລືອ **ໂຣມ 16**:1

ຊ) ປຣີສສີລາ ແລະອາຄວີດລາ ຊຶ່ງຍອມສ່ຽງຊີວິດຂອງເຂົາ **ໂຣມ 16:3**

ໂປໂລເຫັນຄວາມສຳຄັນໃນການເຮັດວຽກຮ່ວມກັບຄົນອື່ນໆ ໃນພະກາຍຂອງພະຄຣິດ ທ່ານເຫັນວ່າ ຄົນອື່ນຄືຜູ້ທີ່ມີສ່ວນເສີມໃນການຮັບໃຊ້ບໍ່ແມ່ນຄູ່ແຂ່ງ ໂປໂລໄດ້ໜູນໃຈໃຫ້ຄຣິສຕະຈັກທີ່ເມືອງ ໂກຣິນຮັບໃຊ້ຮ່ວມກັນເປັນທີມ ໂດຍກ່າວວ່າ 1ໂກຣິນໂທ12:14–20

## 6. ເປັນນັກແກ້ບັນຫາ

ຜູ້ນຳຕ້ອງເປັນຄົນທີ່ແກ້ບັນຫາໄດ້ ຜູ້ຕິດຕາມຕ້ອງການການຊີ້ແນະແນວທາງ ແລະຄຳຕອບສຳລັບບັນຫາຕ່າງໆ ທີ່ພວກເຂົາກຳລັງປະເຊີນຢູ່ ດັ່ງນັ້ນຈຶ່ງເປັນສິ່ງສຳຄັນຍິ່ງທີ່ຜູ້ນຳຈະຕ້ອງມີທັກສະໃນການແກ້ໄຂບັນຫາ

ຈົດໝາຍທີ່ທ່ານຂຽນໄປຍັງກຸງໂຣມຄືຄວາມພະຍາຍາມທີ່ຈະຊ່ອຍພວກເຂົາແກ້ບັນຫາໃນທາງປະຕິບາງເລື່ອງ ເຊັ່ນ ການກິນອາຫານຈຳພວກຜັກ ການລະເວັ້ນເນື້ອສັດ ການຖືຮັກສາວັນພິເສດຕ່າງໆ ເປັນຕົ້ນ **(ໂຣມ 15:1–7)**

ໜັງສືໂກຣິນ ເປັນຄຳແນະນຳຂອງໂປໂລໃນເລື່ອງບັນຫາບາງຢ່າງທີ່ເກີດຂຶ້ນໃນຄຣິສຕະຈັກເຊັ່ນການແຕກແຍກ, ການທີ່ພີ່ນ້ອງພາກັນຂຶ້ນສານ, ການປະພຶດຜິດທາງເພດ, ບັນຫາເລື່ອງການສົມລົດ ອາຫານທີ່ຖວາຍແກ່ຮູບເຄົາລົບ, ການໃຊ້ຂອງປະທານຝ່າຍວິນຍານ, ແລະຫລັກຄຳສອນເລື່ອງການເປັນຂຶ້ນມາຈາກຄວາມຕາຍ

ໜັງສືທີ່ຂຽນໄປເຖິງເມືອງເທຊະໂລນິກ ເປັນຄວາມພະຍາຍາມແກ້ໄຂບັນຫາເລື່ອງການ ສະເດັດກັບມາຄັ້ງທີ່ສອງຂອງພະເຢຊູຄຣິດ

ໂປໂລໄດ້ໃຫ້ແນວທາງບາງປະການໄວ້ເພື່ອການຮັບມືກັບບັນຫາຫຍຸ້ງຍາກທີ່ເກີດຂຶ້ນໃນຄຣິສຕະຈັກ

ກ) ມີປະໂຫຍດ ແລະມີສ່ວນຊ່ອຍໃນງານຫລືບໍ່? **(1ໂກຣິນໂທ 1:23)**

ຂ) ເປັນສິ່ງທີ່ເສີມສ້າງຫລືບໍ່? **(1ໂກຣິນໂທ 1:23)**

ຄ) ມີແນວໂນ້ມຈະເຮັດໃຫ້ເຮົາຕົກເປັນທາດຫລືບໍ່? **(1ໂກຣິນໂທ 6:12)**

GCI

ງ) ເຮັດໃຫ້ເຂົາເຂັ້ມແຂງຂຶ້ນໃນການຕໍ່ສູ້ກັບການທົດລອງຫລືບໍ່? **(ເຮັບເລີ 12:1)**

ຈ) ກອບໃນການຕັດສິນ ໃນເລື່ອງທີ່ບໍ່ແຈ້ງວ່າຖືກ ຫລືຜິດ? **(ໂຣມ 14:2-3)**

\- ຈ) ສິດທິໃນການໃຊ້ຈິດສຳນຶກຂອງຕົວເອງ **(ໂຣມ14**:5)

ສ) ຕ້ອງສະເໜີລາຍງານຕໍ່ພະເຈົ້າເທົ່ານັ້ນ **(ໂຣມ14:4,12)**

ຊ) ຫລີກເວັ້ນເສັຽຈາກການຕິສິນນິນທາ (ໂຣມ14:3)

ຍ) ງົດເວັ້ນບາງຢ່າງເພື່ອເຫັນແກ່ປະໂຫຍດຂອງຄົນອື່ນ **(ໂຣມ 14:21)**

ດ) ງົດເວັ້ນການກະທຳບາງຢ່າງທີ່ຍັງບໍ່ແນ່ໃຈ ຫລືຮູ້ສຶກສົງໄສ (**ໂຣມ 14:22-23)**

## *ຄ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ສາມາດບັນລຸເປົ້າໝາຍໃນທາງປະລິມານໄດ້*

ບໍ່ແມ່ນສິ່ງທີ່ຜິດຫລືຂັດກັບພະຄຳພີແຕ່ຢ່າງໃດ ພະຜູ້ເປັນເຈົ້າບໍ່ໄດ້ຕຳນິທາດຜູ້ທີ່ເຮັດກຳໄລໄດ້ຫ້າຕະລັນ ຫລືສອງຕະລັນ ແຕ່ທາດຊຶ່ງບໍ່ສັດຊື່ໃນໜ້າທີ່ຂອງຕົນຕ່າງຫາກທີ່ຖືກຕຳນິ ນາຍຈຶ່ງຕອບວ່າ ອ້າຍຂ້າຊົ່ວ ແລະກຽດຄ້ານ ເຈົ້າກໍຮູ້ຫລືວ່າເຮົາກ່ຽວທີ່ເຮົາບໍ່ໄດ້ຫວ່ານ ເກັບສະສົມທີ່ເຮົາບໍ່ໄດ້ຫວ່ານ ເຫດສະນັ້ນ ເຈົ້າຄວນເອົາເງິນຂອງເຮົາບໍ່ຝາກໄວ້ທະນາຄານ ເມື່ອເຮົາມາຈະໄດ້ຮັບເງິນຂອງເຮົາທັງດອກເບັ້ຽ" **ມັດທາຍ25:26-27**

ເຖິງແມ່ນບໍ່ແມ່ນສິ່ງຜິດທີ່ຈະປະເມີນປະສິດທິພາບຂອງຜູ້ນຳໂດຍອາໃສເປົ້າໝາຍໃນທາງປະລິມານເປັນເຄື່ອງຕັດສິນ ແຕ່ເຮົາຈະຕ້ອງບໍ່ໃຊ້ເລື່ອງນີ້ເປັນເກນພຽງອັນດຽວເທົ່ານັ້ນໃນການວັດປະສິດທິພາບ ທັງນີ້ເພາະວ່າບາງຄັ້ງຄວາມຈະເລີນເຕີບໃຫຍ່ໃນຝ່າຍວິນຍານກໍເປັນສິ່ງທີ່ວັດກັນບໍ່ໄດ້ໂດຍອາໃສຕົວເລກ

ຖ້າເຮົາຈະໃຫ້ເປົ້າໝາຍໃນທາງປະລິມານເປັນເຄື່ອງວັດປະສິດທິພາບຂອງຜູ້ນຳ ໂປໂລເບິ່ງຄືຈະມີຄຸນສົມບັດໃນຂໍ້ນີ້ ເພາະບໍ່ວ່າທ່ານຈະໄປທີ່ໃດກໍຕາມ ຈະມີຜູ້ຮັບເຊື່ອເກີດຂຶ້ນສະເໝີ

ທີ່ເມືອງອັນຕິໂອເຂັຽ "ພວກຢິວຫລາຍຄົນກັບຄົນເຂົ້າຈາຣີດທີ່ຢຳເກງພະເຈົ້າໄດ້ຕາມໂປໂລແລະບາລະນາບັດໄປ" **ກິດຈະການ 13:43**

ທີ່ເມືອງເດບີ "ພວກເຂົາໄດ້ປະກາດພະກິດຕິຄຸນໃນເມືອງນັ້ນ ຈົນໄດ້ຄົນຫລວງຫລາຍເປັນສາວົກ **(ກິດຈະການ 14:21**) ການກັບໃຈໃຫມ່ຂອງຜູ້ຄົນຈຳນວນຫລາຍນີ້ເກີດຂຶ້ນຕາມເມືອງຕ່າງໆ ອີກຫລາຍເມືອງຊຶ່ງໂປໂລໄດ້ໄປປະກາດ

ໂປໂລໄດ້ສະທ້ອນໃຫ້ເຮົາເຫັນເຖິງຄຸນລັກສະນະຕ່າງໆດັ່ງຕໍ່ໄປນີ້

1. ການເປັນຜູ້**ສື່ສານທີ່ດີ**

GCI

ເປັນສິ່ງທີ່ສຳຄັນທີ່ຜູ້ນຳຈະຕ້ອງມີທັກສະໃນການສື່ສານທີ່ດີ ຖ້າຜູ້ນຳມີແຜນການແລະນິມິດທີ່ດີ ແຕ່ບໍ່ສາມາດທີ່ຈະສື່ສານໃຫ້ຄຣິສຕະຈັກໄດ້ຮັບຮູ້ກໍຄົງເປັນການຍາກທີ່ຈະເຮັດໃຫ້ສາວົກຂອງເຂົາກະທຳການໃຫ້ບັນລຸຜົນທີ່ມຸ້ງຫວັງ

ໂປໂລເປັນນັກສື່ສານຊັ້ນຄູ

ກ) ທ່ານສື່ສານໄດ້ຢ່າງມີປະສິດທິພາບຈົນເຮັດໃຫ້ຜູ້ຟັງຕັດສິນໃຈຮັບເຊື່ອໃນພະຄຣິດ ຫລືບໍ່ກໍຮ້າຍ ແລະອິດສາທ່ານ ທ່ານສື່ສານໄດ້ເປັນຢ່າງດີຈົນບາງຄັ້ງຜູ້ຟັງເຖິງກັບຕອບສະໜອງດ້ວຍນ້ຳຕາໄຫລ "ເຂົາທັງຫລາຍຈຶ່ງຮ້ອງໄຫ້ມາກມາຍ ແລະກອດຄໍຂອງໂປໂລຈູບທ່ານ ເຂົາເປັນທຸກຫລາຍທີ່ສຸດ ເພາະຖ້ອຍຄຳທີ່ທ່ານກ່າວວ່າ ເຂົາຈະບໍ່ເຫັນໜ້າທ່ານອີກ ແລ້ວເຂົາກໍພາທ່ານໄປສົ່ງຢູ່ເຮືອ" **ກິດຈະການ 20:37–38**

ຂ) ເມື່ອໂປໂລກ່າວແກ້ຄະດີຕໍ່ໜ້າສະພາໃນ **ກິດຈະການ23:6–10**

ຄ) ຜູ້ຟັງເກີດການລຸກຮືຂຶ້ນ ທ່ານໄດ້ກ່າວເຖິງແກ່ນຄວາມເຊື່ອຂອງກຸ່ມສະດູກາຍ ແລະຟາລິຊາຍໄດ້ຢ່າງຊັດເຈນເພາະເຫດນັ້ນການໄຕ່ສວນຄະດີຈຶ່ງຕ້ອງຍຸດຕິລົງ ເພາະພວກຊາດູກາຍກັບພວກ ຟາລິຊາຍເກີດຖົກຖຽງກັນຢ່າງໜັກ

ງ) ຕໍ່ໜ້າຜູ້ວ່າຣາຊການເມືອງ ຫລືກະສັດ ໂປໂລກໍກ່າວໂວຫານໄດ້ຢ່າງຈັບໃຈ ເຊັ່ນໃນກໍລະນີທີ່ທ່ານກ່າວເວົ້າກະສັດອາກີປາ (ກິດຈະການ26) ຂະນະທີ່ທ່ານຢູ່ໃນກຸງໂຣມ ຜູ້ຄົນກໍຈະມາຊຸມນຸມຟັງ ຄຳສອນຂອງທ່ານຕັ້ງແຕ່ເຊົ້າຈົນຄ່ຳ **ກິດຈະການ28:23** ການທີ່ຈະໄດ້ຮັບການຕອບສະໜອງ ດີຂະໜາດນັ້ນຍ່ອມຕ້ອງອາໃສຄວາມສາມາດໃນການສື່ສານຢ່າງມີປະສິດທິພາບ

ແຊນເດີ ໄດ້ຕັ້ງຂໍ້ສັງເກດເຖິງຄວາມສາມາດໃນການສື່ສານຂອງໂປໂລ ຊຶ່ງປາກົດຢູ່ໃນຈົດໝາຍຝາກຂອງທ່ານໄວ້ວ່າສິນລະທຳ ແລະຄວາມຊື່ສັດທາງປັນຍາ ເມື່ອຈຳເປັນຕ້ອງຂຽນ ຈົດໝາຍທີ່ຍາກລຳບາກ ໂປໂລຈຸ່ມປາກກາຂອງທ່ານລົງໃນນ້ຳຕາ ບໍ່ແມ່ນນ້ຳກົດ "ເພາະວ່າຂ້າພະເຈົ້າ ຂຽນໜັງສືເຖິງທ່ານ ເພາະຂ້າພະເຈົ້າມີຄວາມທຸກລະທົມໃຈຫລາຍແລະນ້ຳຕາໄຫລ" **(2ໂກຣິນໂທ2:4)**

**2. <u>ເປັນຜູ້ສ້າງແຮງບັນດານໃຈ</u>**

ການສ້າງແຮງບັນດານໃຈ
ຄືຄຸນລັກສະນະສຳຄັນໃນຕົວຂອງຜູ້ນຳເພາະມັນຄືກຸນແຈທີ່ຈະນຳໄປສູ່ຄວາມສຳເລັດຂອງແຜນງານ ແລະເປົ້າໝາຍຕ່າງໆ ແມ່ນຜູ້ນຳຈະມີແຜນງານທີ່ດີ ແຕ່ຖ້າເຂົາບໍ່ສາມາດທີ່ຈະລົນນະລົງໃຫ້ສະມາຊິກກະທຳຕາມເຂົາໄດ້ ເຂົາກໍອາດຈະບໍ່ສາມາດບັນລຸຜົນສຳເລັດຕາມຈຸດປະສົງທີ່ໄດ້ຂຽນໄວ້ເທິງກະດານນັ້ນ

GCI

ໂປໂລ ຄືຜູ້ສ້າງແຮງບັນດານໃຈທີ່ຍິ່ງໃຫຍ່ ຊຶ່ງຄອຍໃຫ້ກໍາລັງໃຈ ແລະເສີມສ້າງຄົນອື່ນຢູ່ສະເໝີ ໂດຍການເລົ້າໃຈຂອງໂປໂລ
ຕີໂມທຽວຈຶ່ງສາມາດເປັນຜູ້ນໍາໃຫ້ແກ່ບັນດາຜູ້ເຊື່ອຊຶ່ງຢູ່ໃນຄວາມດູແລຂອງເຂົານັ້ນໂປໂລໄດ້ໜູນໃຈຕີໂມທຽວໄວ້ດັ່ງຕໍ່ໄປນີ້

ອັນຂອງປະທານຂອງພະເຈົ້າຊຶ່ງມີຢູ່ໃນທ່ານ ໂດຍທີ່ຂ້າພະເຈົ້າໄດ້ເອົາມືວາງເທິງທ່ານນັ້ນ ຂໍເຕືອນວ່າທ່ານຈົ່ງກະທໍາໃຫ້ຮຸ່ງເຮືອງຂຶ້ນ ເພາະວ່າພະເຈົ້າບໍ່ໄດ້ຊົງປະທານຈິດທີ່ຂີ້ຢ້ານໃຫ້ເຮົາ ແຕ່ໄດ້ຊົງປະທານຈິດທີ່ປະກອບດ້ວຍລິດຄວາມຮັກ ແລະການບັງຄັບຕົນເອງໃຫ້ແກ່ເຮົາ
**2 ຕີໂມທຽວ 1:6-7**

ຢ່າໃຫ້ຜູ້ໃດໝິ່ນປະໝາດຄວາມໜຸ່ມແໜ້ນຂອງທ່ານ ແຕ່ຈົ່ງເປັນແບບຢ່າງແກ່ຄົນທີ່ເຊື່ອທັງປວງທັງໃນທາງວາຈາ ແລະການປະພຶດ ໃນຄວາມຮັກ ໃນຄວາມເຊື່ອ ແລະໃນຄວາມບໍລິສຸດ
**1ຕີໂມທຽວ 4:12**

ແມ່ນຫລັງຈາກທີ່ທ່ານຖືກໂບຍຕີຢ່າງໜັກ ແລະຖືກຈໍາຈອງໃນຄຸກ **(ກິດຈະການ 16:23)**

ໂປໂລກັບສີລາກໍຍັງສາມາດທີ່ຈະໜູນໃຈບັນດາຜູ້ເຊື່ອໄດ້ ຕາມປົກກະຕິຄົນທີ່ຕົກຢູ່ ໃນສະຖານະການຢ່າງນັ້ນຍ່ອມຮູ້ສຶກທໍ້ຖອຍ ແລະຕ້ອງການຮັບການໜູນໃຈຈາກຄົນອື່ນ ເມື່ອໂປໂລກັບສີລາອອກຈາກຄຸກແລ້ວ ເຂົາໄປປະຊຸມກັບພວກພີ່ນ້ອງທີ່ບ້ານຂອງນາງລີເດັຽ ແລະໄດ້ໜູນໃຈພວກເຂົາທີ່ນັ້ນ **(ກິດຈະການ16:40)**

3. **ມີກໍາລັງໃຈດີ**

ການມີກໍາລັງໃຈດີ ເປັນສິ່ງທີ່ຊ່ວຍໃຫ້ຜູ້ນໍາເອົາຊະນະບັນຫາ ອັນຕະລາຍ ຄໍາວິພາກວິຈານ ຄວາມພ່າຍແພ້ ແລະຄວາມຫຍຸ້ງຍາກຕ່າງໆທີ່ຕ້ອງປະສົບໃນຂະນະເຮັດໜ້າທີ່ຜູ້ນໍາຢູ່ນັ້ນ ຜູ້ນໍາອາດຈະມີແຜນການທີ່ດີ ແຕ່ຖ້າເຂົາຂາດກໍາລັງໃຈທີ່ຈະລົງມືປະຕິບັດເພາະຢ້ານການຕໍ່ຕ້ານ ຂັດຂວາງ ແຜນການດັ່ງກ່າວກໍຍ່ອມບໍ່ສາມາດປາກົດເປັນຈິງຂຶ້ນມາໄດ້

ໂປໂລ ຄືຜູ້ນໍາທີ່ມີກໍາລັງໃຈສິງຍິ່ງ ທ່ານຕ້ອງສ່ຽງຊີວິດຂອງຕົນສະເໝີໆ ເພື່ອເຫັນແກ່ພະກິດຕິຄຸນ

ກ) ບໍ່ວ່າຈະເປັນກຸ່ມຄົນທີ່ລຸກຮືຂຶ້ນຕໍ່ຕ້ານຢ່າງໃນເມືອງເອເຟໂຊ **ກິດຈະການ 19:30**
ຂ) ຫລືກຸ່ມຍິວໃນເມືອງອັນຕີໂອເຂັຽ ແລະໂກອີນ ຊຶ່ງຕໍ່ສູ້ຂັດຂວາງທ່ານ **ກິດຈະການ 14:19**
ຄ) ໂປໂລມີໃຈກ້າທີ່ຈະກ່າວຕໍານິຜູ້ນໍາທີ່ອາວຸໂສກວ່າທ່ານ ໃນກໍລະນີຂອງອັກຄະສາວົກເປໂຕ ແຕ່ເມື່ອເຄຟາມາເຖິງ ອັນຕີໂອເຂັຽແລ້ວ ຂ້າພະເຈົ້າກໍໄດ້ຄັດຄ້ານທ່ານຊຶ່ງໆໜ້າ ເພາະວ່າທ່ານ ເຮັດຜິດ" **ຄາລາເຕັຽ 2:11**

4. <u>**ເປັນຜູ້ມີວິໄສທັດ**</u>

ພະຄໍາພີໄດ້ເນັ້ນເຖິງຄວາມສໍາຄັນຂອງການມີນິມິດວິໄສທັດ "ບ່ອນໃດທີ່ບໍ່ມີນິມິດ ປະຊາຊົນກໍພິນາດ" **(ສຸພາສິດ 29:18)**

GCI

ຈອນ ແມກຊແວວ ໄດ້ຕັ້ງຂໍ້ສັງເກດໄວ້ວ່າ

> ນິມິດທີ່ມີປະສິດທິພາບນັ້ນເຮັດໃຫ້ຄົນມີແນວທາງ ເຮັດໃຫ້ອົງກອນມີວິໄສທັດ. .ມີທິດທາງ ຊຶ່ງບໍ່ແມ່ນສິ່ງທີ່ໄດ້ມາໂດຍກົດລະບຽບ ຄູ່ມືນະໂຍບາຍ ຫລືແຜນພູມການບໍລິການງານ ທິດທາງສໍາລັບອົງກອນເກີດມາຈາກນິມິດ

ພັນທະກິດຂອງໂປໂລເລີ້ມຕົ້ນໃນການມີນິມິດທີ່ຈະນໍາພະກິດຕິຄຸນອອກໄປສູ່ຄົນຕ່າງຊາດ ຄົນຍີວ ແລະກະສັດທັງຫລາຍ(**ກິດຈະການ9:15)**

ເມື່ອທ່ານຂຽນຈົດໝາຍໄປຍັງຊາວໂຣມເພື່ອອະທິບາຍເຖິງການເຮັດພັນທະກິດໃຈແຄ້ວນຕ່າງໆ "ຕັ້ງແຕ່ກຸງເຢລູຊາເລັມ ຢ່າງຖ້ວນຖີ່ໄປຈົນເຖິງເມືອງອີໂລນີຍູມ" **(ໂຣມ15:19)** ນັ້ນ ໃນທີ່ສຸດ ໂປໂລໄດ້ກ່າວໄວ້ວ່າ "ໃນແຄ້ວນເຫລົ່ານີ້ບໍ່ມີທີ່ຫລົງເຫລືອໃຫ້ຂ້າພະເຈົ້າກະທໍາກິດໄດ້ອີກຕໍ່ໄປ" **(ໂຣມ15:23)**

ໂປໂລໄດ້ອະທິບານເຖິງນິມິດຂອງທ່ານໄວ້ດັ່ງນີ້ "ອັນທີ່ຈິງຂ້າພະເຈົ້າໄດ້ຕັ້ງເປົ້າໄວ້ຢ່າງນີ້ວ່າ ຈະປະກາດຂ່າວປະເສີດໃນບ່ອນຊຶ່ງບໍ່ເຄີຍມີໃຜອອກພະນາມພະຄຣິດມາກ່ອນ ເພື່ອຂ້າພະເຈົ້າຈະໄດ້ບໍ່ກໍ່ຂຶ້ນເທິງຮາກຖານທີ່ຄົນອື່ນໄດ້ວາງໄວ້ກ່ອນແລ້ວ" **ໂຣມ15:20**

ເມື່ອເຂົ້າໃກ້ວາລະສຸດທ້າຍແຫ່ງຊີວິດ ໂປໂລໄດ້ກ່າວຕໍ່ໜ້າກະສັດອາກີປາວ່າ "ເມື່ອເປັນເຊັ່ນນັ້ນແລ້ວ ຂ້າພະບາດຈຶ່ງເຊື່ອຟັງນິມິດຊຶ່ງມາຈາກສະຫວັນນັ້ນ ແລະບໍ່ໄດ້ຂັດຂືນ" **ກິດຈະການ 26:19**

5. <u>**ກ້າສ່ຽງ**</u>

ເມື່ອໂປໂລຮັບເຊື່ອແລ້ວ ຖ້າທ່ານຈະເປັນ "ຜູ້ເຊື່ອທີ່ນິ້ງງຽບ" ໃນທ່າມກາງຊາວຢິວທີ່ຕໍ່ຕ້ານ ພະກິດຕິຄຸນນັ້ນເສັຽກໍໄດ້ຫລາຍຄັ້ງພວກນິຍົມລັດທິຢູດາວາງແຜນຈະຂ້າທ່ານ ໃນຂະນະທີ່ຢູ່ໃນເມືອງດາມັດສະກັດນັ້ນ "ພວກຢິວໄດ້ວາງແຜນທີ່ຈະຂ້າໂປໂລເສັຽ" **(ກິດຈະການ9:23**) ແລະອີກຄັ້ງນຶ່ງ ຂະນະທີ່ທ່ານຢູ່ໃນກຸງເຢລູຊາເລັມ "ພວກເຂົາພະຍາຍາມທີ່ຈະຂ້າທ່ານ" **(ກິດຈະການ9:29)**

ທັງໝົດນີ້ເປັນເພາະໂປໂລໄດ້ສ່ຽງຊີວິດຂອງທ່ານທີ່ຈະເທດສະໜາວ່າພະເຢຊູຊົງເປັນພະເມຊີອາ **(ກິດຈະການ9:22,28-29)**

ໃນຂະນະທີ່ທ່ານຢູ່ທີ່ເມືອງເອເຟໂຊມີການຈາລະຈົນເກີດຂຶ້ນເພາະໂປໂລໄດ້ເທດສະໜາເປັນທີ່ຈັບໃຈ ຈົນຫລາຍຄົນໄດ້ຫັນກັບມາຫາພະຜູ້ເປັນເຈົ້າ ພວກພໍ່ຄ້າເຮັດຮູບເຄົາລົບໂນໂຫ ຫລາຍທີ່ເຫັນ ເຫດການເຊັ່ນນັ້ນເກີດຂຶ້ນ ຈຶ່ງໄດ້ຍຸຝູງຊົນໃຫ້ລຸກຮືຂຶ້ນຕໍ່ຕ້ານໂປໂລ ລູກາໄດ້ບັນທຶກ ເຫດການ ຄັ້ງນັ້ນໄວ້ວ່າ "ຝ່າຍໂປໂລຢາກຈະເຂົ້າໄປໃນໝູ່ຄົນ ແຕ່ພວກສາວົກບໍ່ຍອມໃຫ້ທ່ານເຂົ້າໄປ" **ກິດຈະການ 19:30**

6. <u>**ມີພະລັງ ແລະຄວາມກະຕືລືລົ້ນ**</u>

ຜູ້ນໍາທີ່ມີແຜນການດີ ແຕ່ບໍ່ມີກໍາລັງທີ່ຈະເຮັດໃຫ້ງານສໍາເລັດຜົນໄດ້ ກໍຄົງປຽບເໝືອນກັບຄົນຂັບລົດທີ່ມີເຄື່ອງຍົນແຮງສູງມີແຜນທີ່ນໍາທາງດີ ແຕ່ບໍ່ມີນໍ້າມັນລົດ

GCI

ການທີ່ຈະເດີນທາງຕັ້ງແຕ່ກຸງເຢລູຊາເລັມເລື້ອຍໄປຈົນເຖິງເມືອງອີໂດນີຍູມ **(ໂຣມ15:19)** ແລະແອະຢັຽນເມືອງຫລັກຕ່າງໆຫລາຍກວ່າ20 ແຫ່ງໄດ້ນັ້ນ ແນ່ນອນວ່າຕ້ອງໃຊ້ພະລັງງານຫລາຍ

ໂປໂລທຳການເຫລົ່ານີ້ໄດ້ໂດຍປັດສະຈາກວິທີການຄົມມະນາຄົມຢ່າງທີ່ເຮົາມີຢູ່ໃນຍຸກປະຈຸບັນ ໂປໂລເປັນຄົນທີ່ມັກລົງມືທຳງານ ນັບຕັ້ງແຕ່ເລີ້ມທຳອິດທີ່ຮັບເຊື່ອ ພະຄຳພີກ່າວໄວ້ວ່າ "ທ່ານບໍ່ໄດ້ລີລໍ ທ່ານປະກາດຕາມທຳມະສາລາ ກ່າວເລື່ອງພະເຢຊູວ່າ "ພະອົງຊົງເປັນພະບຸດຂອງພະເຈົ້າ" **(ກິດຈະການ9:20)** ໂປໂລເດີນທາງຢູ່ສະເໝີ ແລະປະກາດພະກິດຕິຄຸນແກ່ຜູ້ຄົນຢູ່ຕະຫລອດ ເມື່ອໃກ້ວາລະສຸດທ້າຍແຫ່ງຊີວິດຂອງທ່ານ ພະຄຳພີບັນທຶກໄວ້ວ່າ ໂປໂລຈຶ່ງໄດ້ອາໃສຢູ່ຄົບສອງປີໃນຕຶກທີ່ທ່ານເຊົ່າ ແລະໄດ້ຕ້ອນຮັບຄົນທັງປວງທີ່ມາຫາທ່ານ ທັງປະກາດແຜ່ນດິນຂອງພະເຈົ້າ ແລະສັ່ງສອນຄວາມຈິງເລື່ອງພະເຢຊູຄຣິດເຈົ້າໂດຍເປີດເຜີຍບໍ່ມີຜູ້ນຶ່ງຜູ້ໃດຂັດຂວາງ **ກິດຈະການ 28:30–31**

ໂປໂລໄດ້ເປັນພະຍານຢືນຢັນແຫລ່ງແຫ່ງພະລັງໃນຊີວິດຂອງທ່ານວ່າ "ເພື່ອເຫດນີ້ເອງ ຂ້າພະເຈົ້າຈຶ່ງອົດທົນທຳງານດ້ວຍຄວາມອຸດສາຫະ ເຂັ້ມແຂງດ້ວຍພະລັງທີ່ພະອົງຊົງດົນໃຈຂ້າພະເຈົ້າຢູ່ " **ໂກໂລຊາຍ1:29**ອີກຕອນນຶ່ງທ່ານເປັນພະຍານວ່າ "ຫົງກັນຂ້າມ ຂ້າພະເຈົ້າກັບທຳງານຫລາຍກວ່າພວກເຂົາເສັຽອີກ ບໍ່ແມ່ນຕົວຂ້າພະເຈົ້າເອງເຮັດ ພະຄຸນຂອງພະເຈົ້າຊຶ່ງດຳລົງຢູ່ກັບ ຂ້າພະເຈົ້າຕ່າງຫາກທີ່ເຮັດ" **1ໂກຣິນໂທ 15:10**

## *໑. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ມີຄຸນລັກສະນະໃນທາງທຳ*

ເຖິງແມ່ນຈະເປັນສິ່ງທີ່ດີຜູ້ນຳຕ້ອງມີທັກສະໃນດ້ານການບໍລິຫານ ແຕ່ເຮົາຕ້ອງຮູ້ດີວ່າຊີວິດ ຝ່າຍວິນຍານຈະແຊກຊຶມເຂົ້າໄປສູ່ກິດຈະກຳຕ່າງໆ ໄດ້ກໍໂດຍອາໃສຄວາມເຊື່ອ ແລະຄຳອະທິຖານເທົ່ານັ້ນ ງານພັນທະກິດຄຣິສຕຽນບໍ່ແມ່ນງານຊຶ່ງຈະເຮັດໃຫ້ສຳເລັດລົງໄດ້ໂດຍອາໃສພຽງຄຸນສົມບັດການບໍລິຫານຂອງຜູ້ນຳເທົ່ານັ້ນ

ພະຄຳພີໄດ້ບັນທຶກເຖິງເຫດການທີ່ໂປໂລໄດ້ເຮັດພັນທະກິດພາຍໃຕ້ການຊົງເຈີມຂອງພະວິນຍານບໍລິສຸດໄວ້ຫລາຍຄັ້ງ

ແຕ່ໂຊໂລທີ່ມີຊື່ອີກວ່າໂປໂລ ປະກອບດ້ວຍພະວິນຍານບໍລິສຸດເບິ່ງເອລີມາສ ແລະເວົ້າວ່າ "ເຈົ້າເປັນຄົນເຕັມໄປດ້ວຍອຸບາຍ ແລະໃຈຮ້າຍທຸກຢ່າງ ລູກຂອງມານຮ້າຍ ເປັນສັດຕູຕໍ່ບັນດາຄວາມຊອບທຳ ເຈົ້າຈະບໍ່ຢຸດພະຍາຍາມເຮັດທາງຕົງຂອງພະເຈົ້າໃຫ້ເຂໄປຫລື ເບິ່ງເຖີດ ພະຫັດຂອງອົງພະຜູ້ເປັນເຈົ້າຈະລົງໂທດເຈົ້າ ເຈົ້າຈະເປັນຄົນຕາບອດບໍ່ເຫັນດວງອາທິດຈົນເຖິງເວລາກຳນົດ" ທັນໃດນັ້ນຄວາມມືດມົວກໍບັງເກີດແກ່ເອລີມາສ ເອລີມາສຄຳຫາຄົນໃຫ້ຈູງມືໄປ **ກິດຈະການ 13:9–11**

ນອກເໜືອຈາກການຊົງເຈີມຂອງພະວິນຍານບໍລິສຸດແລ້ວ ໂປໂລຍັງປະກອບດ້ວຍຄຸນລັກ ສະນະອື່ນໆອີກດັ່ງຕໍ່ໄປນີ້

### 1. <u>ຄວາມຖ່ອມໃຈ</u>

ຄວາມຖ່ອມໃຈຄືຄວາມເຂັ້ມແຂງຂອງຜູ້ນຳ ຜູ້ນຳບາງຄົນອາດຈະມີຄວາມສາມາດຕ່າງໆມາກມາຍ ແຕ່ຖ້າຄວາມເຍີ່ຍິ່ງຄືບຄານເຂົ້າໄປສູ່ຈິດໃຈຂອງເຂົາແລ້ວ ຊີວິດຂອງເຂົາຈະພັງທະລາຍລົງຢ່າງແນ່ນອນໃນຂະນະທີ່ກຳລັງພະຍາຍາມມຸ້ງໜ້າໄປສູ່ຄວາມສຳເລັດ

GCI

**ສຸພາສິດ 16:18** ເຕືອນເຮົາໄວ້ວ່າ "ຄວາມເຢີ່ຫຍິ່ງເດີນໜ້າການຖືກທຳລາຍ ແລະຈິດໃຈທີ່ຍະໂສ ນຳໜ້າການລົ້ມ"

ພະເຢຊູຊົງສຳແດງໃຫ້ເຮົາເຫັນເຖິງຄວາມສຳຄັນຂອງການຖ່ອມໃຈໃນຊີວິດຜູ້ນຳ ໂດຍການທີ່ພະອົງຊົງຫຍິບຜ້າຄາດເອວແລ້ວທຳການລ້າງຕີນສາວົກ **ໂຢຮັນ 13:4–5**

ໂປໂລແນະນຳຕົວເອງວ່າເປັນ "ຜູ້ຮັບໃຊ້ຂອງພະເຈົ້າ" ຊຶ່ງປາກົດຢູ່ໃນ **ໂຣມ 1:1 ແລະຕີໂຕ 1:1**

ໂປໂລໄດ້ເລີ້ມທຳໜ້າທີ່ຮັບໃຊ້ໂດຍການເກັບຟືນມາກໍ່ໄຟຊ່ວງເວລາຫລາຍປີທີ່ໂປໂລເຮັດພັນທະກິດໃນຄຣິສຕະຈັກນັ້ນ ທ່ານເນັ້ນທີ່ການທຳງານຮັບໃຊ້ ທ່ານພະຍາຍາມຊອກຫາຊ່ອງທາງທີ່ຈະແບ່ງປັນ ແລະເປັນພະພອນແກ່ຄົນທີ່ເຮັດພັນທະກິດດ້ອຍສະເໝີ ທ່ານປັ່ນນິບັດຮັບໃຊ້ຫລາຍ ຈົນທ່ານເອງໄດ້ກ່າວໄວ້ວ່າ"ເພາະວ່າຂ້າພະເຈົ້າກຳລັງຈະຕົກເປັນເຄື່ອງບູຊາຢູ່ແລ້ວ (ຖືກເທລົງເໝືອນເປັນເຄື່ອງດື່ມບູຊາ)" **2ຕີໂມທຽວ 4:6**

ໂປໂລເປັນຄົນທີ່ບໍ່ຍອມອວດຕົວໃນເລື່ອງຄວາມສຳເລັດຕ່າງໆໃນຝ່າຍວິນຍານເຖິງແມ່ນທ່ານຈະໄດ້ເຮັດໃນສິ່ງທີ່ໂດດເດັ່ນມາກມາຍຫລາຍຢ່າງເພື່ອພະເຈົ້າທ່ານຍົກຍ້ອງອົງພະຜູ້ເປັນເຈົ້າສະເໝີ ແລະຮູ້ວ່າທີ່ທ່ານເປັນຢູ່ຢ່າງນັ້ນໄດ້ກໍເພາະພະຄຸນຂອງພະເຈົ້າເທົ່ານັ້ນ

ເປໂຕກັບໂປໂລ ເຄີຍຂັດແຍ້ງກັນຢ່າງຮຸນແຮງໃນບາງຄັ້ງ ແຕ່ບໍ່ເຄີຍຈັກຄັ້ງດຽວທີ່ທ່ານທັງສອງຈະທະເລາະກັນໃນເລື່ອງຄວາມເປັນໃຫຍ່ ໂປໂລເປັນຫວ່ງເຖິງເລື່ອງບົດບາດ ຂອງອັກຄະສາວົກທີ່ປາກົດຕໍ່ຄຣິສຕະຈັກ ແລະຊາວໂລກ..ແຕ່ພະເຈົ້າບໍ່ໄດ້ຕັ້ງພວກເຂົາໄວ້ຢ່າງປູ່ສະນີສະຖານ ກົງກັນຂ້າມພວກເຂົາເປັນ "ຄົນທ້າຍສຸດຄືຜູ້ທີ່ໄດ້ຖືກປັບໂທດໃຫ້ເຖິງຕາຍ.." ພວກເຂົາຖືກປະຕິບັດຈາກຊາວໂລກ ແລະບາງຄັ້ງຈາກຄຣິສຕະຈັກເໝືອນກັບວ່າເປັນເຫຍື່ອທັດສະນະຂອງໂປໂລຊ່າງຫ່າງໄກຈາກລັດທິບູຊາບຸກຄົນໃນຍຸກໃຫມ່ຂອງເຮົາເຫລືອເກີນ ອັກຄະສາວົກທຽມເທັດຕ່າງຫາກທີ່ມັກຍົກຕົວເອງ ສະໜັບສະໜູນລັດທິບູຊາບຸກຄົນຢ່າງອອກນອກໜ້າ ແຂ່ງຂັນຊີງດີກັນວ່າໃຜເປັນໃຫຍ່ທີ່ສຸດ ແຕ່ໂປໂລໜູນໃຈຄົນທັງຫລາຍໃຫ້ມີພະໄທຢ່າງຜູ້ຮັບໃຊ້ແບບພະຄຣິດ

ຄວາມຖ່ອມໃຈຂອງໂປໂລນັ້ນເຫັນໄດ້ຈາກການທີ່ທ່ານພະຍາຍາມຮຽນຮູ້ຢູ່ສະເໝີໂປໂລບໍ່ແມ່ນຜູ້ນຳທີ່ຄິດວ່າຕົນເອງບັນລຸແລ້ວ ແລະບໍ່ຕ້ອງພັດທະນາໄປສູ່ຄວາມຈະເລີນຫລືເພີ່ມພູນຄວາມຮູ້ໃດໆອີກເມື່ອເຫັນທ່ານໄດ້ກໍ່ຕັ້ງຄຣິສຕະຈັກມາຫລາຍແຫ່ງໄດ້ເຫັນອົງພະຜູ້ເປັນເຈົ້າ ໄດ້ຮັບນິມິດຈາກສະຫວັນໄດ້ເຮັດການອັດສະຈັນ ແລະການຮັກສາໂລກມາມາກມາຍໃນງານພັນທະກິດ ຄົນຄົງຄິດວ່າໂປໂລຄົງຮູ້ອັນໃດຄົບຖ້ວນໝົດແລ້ວ ແຕ່ໂປໂລບໍ່ໄດ້ມີຄວາມຄິດເຊັ່ນນັ້ນເລີຍທ່ານປາດຖະໜາທີ່ຈະຮູ້ຈັກພະຄຣິດເພີ່ມຂຶ້ນສະເໝີ ໂປໂລສະແດງເຖິງຄວາມປາດຖະໜາຂອງທ່ານໄວ້ໃນພະທຳຟີລິບບອຍ 3:13 ວ່າ "ເບິ່ງກ່ອນພີ່ນ້ອງທັງຫລາຍຂ້າພະເຈົ້າບໍ່ຖືວ່າຂ້າພະເຈົ້າໄດ້ຮັບໄວ້ແລ້ວ ແຕ່ຂ້າພະເຈົ້າເຮັດຢ່າງນຶ່ງ ຄືລືມສິ່ງທີ່ຜ່ານພົ້ນມາແລ້ວເສັຽ ແລະໂນ້ມຕົວອອກໄປຫາສິ່ງທີ່ຢູ່ຂ້າງໜ້າ" ໃນຂໍ້10 ໂປໂລປະກາດວ່າ ທ່ານຕ້ອງການທີ່ຈະຮູ້ຈັກພະຄຣິດ ແລະມີປະສົບການກັບລິດເດດແຫ່ງການຄືນພະຊົນຂອງພະອົງ ແລະຕ້ອງການຮ່ວມທຸກກັບພະອົງ ຍອມຕັ້ງອາລົມຕາຍເໝືອນພະອົງໂປໂລຍັງຄົງຮຽນຮູ້ຢູ່ເລື້ອຍໄປເຖິງແມ່ນວ່າທ່ານຈະຮູ້ຈັກພະຄຣິດຢ່າງສະໜິດສະໜົມແລ້ວກໍຕາມ

ແຊນເດີ ກ່າວເຖິງຄວາມຖ່ອມໃຈຂອງໂປໂລໃນການປະຕິບັດຕໍ່ເພື່ອນຮ່ວມງານຂອງທ່ານໄວ້ວ່າ

GCI

ທ່ານມັກທີ່ຈະນັບເພື່ອນຮ່ວມງານເຂົ້າເປັນທີມດຽວກັບທ່ານ ແມ່ນຈະເປັນຄົນທີ່ອາຍຸຍັງນ້ອຍ ທ່ານກໍນັບວ່າເທົ່າທຽມກັນກັບທ່ານ "ເຮົາເປັນເພື່ອນຮ່ວມງານດ້ວຍກັນກັບພະເຈົ້າ" **(1ໂກຣິນໂທ3:9)**
ເມື່ອກ່າວເຖິງຕີໂມທຽວ ໂປໂລຂຽນໄວ້ວ່າ "ເມື່ອຕີໂມທຽວມາຫາທ່ານ ຈົ່ງໃຫ້ເຂົາຢູ່ກັບທ່ານໂດຍບໍ່ໃຫ້ເຂົາເກີດຄວາມກະດາກ ເພາະວ່າເຂົາທຳງານຂອງອົງພະຜູ້ເປັນເຈົ້າຄືກັນກັບຂ້າພະເຈົ້າ **(1ໂກຣິນໂທ16:10)**

ທ່ານເອີ້ນຕີໂຕເປັນຜູ້ຮ່ວມງານ (2ໂກຣິນໂທ8:23)

**2. <u>ມີໃຈເມດຕາສົງສານ</u>**

ເປັນສິ່ງສຳຄັນຍິ່ງທີ່ຜູ້ນຳຄຣິສຕຽນຕ້ອງມີໃຈເມດຕາສົງສານຄົນອື່ນ ເພາະຈິດໃຈເຊັ່ນນີ້ເຮັດໃຫ້ເກີດບັນຍາກາດເອື້ອອຳນວຍຕໍ່ການທີ່ຜູ້ຄົນຈະທຸ້ມເທຍອມເຮັດສິ່ງທີ່ດີທີ່ສຸດ ພະເຢຊູຊົງປົນນິບັດຄົນທັງຫລາຍຢູ່ສະເໝີດ້ວຍໃຈເມດຕາສົງສານ....... **ມັດທາຍ9:36**

"ເມື່ອພະອົງຊົງທອດພະເນດເຫັນຝູງຊົນ ພະອົງກໍເກີດຄວາມສົງສານພວກເຂົາ" **ມາຣະໂກ 8:1**

ຫລາຍຄັ້ງທີ່ໂປໂລເຕັມໄປດ້ວຍຄວາມເມດຕາສົງສານເມື່ອທ່ານກ່ຽວຂ້ອງກັບຜູ້ທີ່ຍັງບໍ່ຮູ້ຈັກພະເຈົ້າ ຫລືຄຣິສຕຽນທີ່ຫລົງໄປຈາກທາງຂອງພະຄຣິດ ທ່ານໄດ້ສະແດງອອກເຖິງຄວາມຮັກທີ່ມີຕໍ່ຄຣິສຕະຈັກເມືອງໂກຣິນໂທໃນລັກສະນະດັ່ງຕໍ່ໄປນີ້ຄື "ເພາະວ່າຂ້າພະເຈົ້າຂຽນໜັງສືເຖິງທ່ານເພາະຂ້າພະເຈົ້າມີຄວາມທຸກລະທົມໃຈຫລາຍແລະນ້ຳຕາໄຫລ ບໍ່ແມ່ນເພື່ອຈະເຮັດໃຫ້ທ່ານເປັນທຸກແຕ່ເພື່ອຈະໃຫ້ທ່ານຮູ້ຈັກຄວາມຮັກຢ່າງຫລວງຫລາຍຊຶ່ງຂ້າພະເຈົ້າມີຕໍ່ທ່ານທັງຫລາຍ" **2ໂກຣິນໂທ 2:4**

ໂປໂລໄດ້ສະແດງຄວາມຮັກຕໍ່ຜູ້ເຊື່ອຊຶ່ງຫລົງຫາຍ ແລະໄດ້ກັບໃຈໃຫມ່ ໂດຍຂຽນໄວ້ວ່າ "ດັ່ງນັ້ນຂ້າພະເຈົ້າຂໍວິງວອນທ່ານໃຫ້ຢືນຢັນຄວາມຮັກຕໍ່ຄົນນັ້ນໃຫມ່" **2ໂກຣິນໂທ 2:8**

3. ມີຄວາມເຊື່ອໃນພະເຈົ້າ
ຄວາມເຊື່ອຄືຄຸນສົມບັດທີ່ສຳຄັນທີ່ສຸດຂອງຜູ້ນຳ ຄົນທີ່ບໍ່ມີຄວາມເຊື່ອໃນພະເຈົ້າຈະເປັນທີ່ພໍພະໄທຂອງພະອົງບໍ່ໄດ້ເລີຍ ບໍ່ວ່າເຂົາຈະມີຄວາມສາມາດໃນການສື່ສານ ແລະບໍລິຫານງານຫລາຍພຽງໃດກໍຕາມ **ເຮັບເລີ 11:6**
ກ່າວໄວ້ຊັດເຈນວ່າ ຖ້າປັດສະຈາກຄວາມເຊື່ອແລ້ວຈະເປັນທີ່ພໍພະໄທພະເຈົ້າບໍ່ໄດ້ເລີຍ ການມີຄວາມເຊື່ອໃນພະເຈົ້າຈະເຮັດໃຫ້ຜູ້ນຳມີໄຊຊະນະໃນຍາມວິກິດຫລືມີບັນຫາຫຍຸ້ງຍາກເກີດຂຶ້ນ

ໂປໂລເປັນບູລຸດແຫ່ງຄວາມເຊື່ອ ທ່ານປະກາດໄວ້ວ່າ "ເພາະເຮົາດຳເນີນຊີວິດໂດຍຄວາມເຊື່ອບໍ່ແມ່ນຕາມທີ່ຕາເບິ່ງເຫັນ" 2ໂກຣິນໂທ5:7

ໂດຍຄວາມເຊື່ອໃນພະເຈົ້າ ໝາຍສຳຄັນແລະການອັດສະຈັນຈຶ່ງເກີດຂຶ້ນໃນພັນທະກິດຂອງໂປໂລ - ເຮັດໃຫ້ຄົນບໍ່ຕາບອດ **(ກິດຈະການ13:9–11)** ຄົນເປ້ຍໄດ້ຮັບການຮັກສາ **(ກິດຈະການ 14:8–10)** ຜູ້ເຊື່ອເຕັມດ້ວຍພະວິນຍານບໍລິສຸດ ແລະເວົ້າພາສາແປກໆ ແລະພະຍາກອນ **(ກິດຈະການ 19:6)**

GCI

ຜ້າເຊັດໜ້າ ແລະຜ້າກັນເປື້ອນຈາກຕົວໂປໂລມີການຊົງເຈີມທີ່ສາມາດຮັກສາຄົນເຈັບປ່ວຍໄດ້ **(ກິດຈະການ 19:11)**

**4. <u>ຢູ່ຝ່າຍວິນຍານ</u>**

ເຖິງແມ່ນທັກສະດ້ານການບໍລິຫານຫລືການຈັດການຈະມີບົດບາດ ແລະຄວາມສຳຄັນໃນງານພັນທະກິດຄຣິສຕຽນ ແຕ່ຄຸນສົມບັດທີ່ຜູ້ນຳຄຣິສຕຽນຈະຂາດບໍ່ໄດ້ເລີຍຄື ການເປັນຄົນຝ່າຍວິນຍານ ໂປໂລເປັນຜູ້ທີ່ມີຄວາມເລິກໃນຝ່າຍວິນຍານ ເຫັນໄດ້ແຈ້ງຈາກການທີ່ທ່ານເປັນນັກອະທິຖານ ຊຶ່ງເຮົາຈະໄດ້ກ່າວ ຄວາມປະສົງຂອງທ່ານສຳລັບຜູ້ເຊື່ອທັງຫລາຍນັ້ນບໍ່ໄດ້ຢູ່ທີ່ພະພອນຝ່າຍໂລກ ແຕ່ເປັນພະພອນຝ່າຍວິນຍານໂປໂລກ່າວວ່າ ທ່ານປາດຖະໜາ ທີ່ຈະໄດ້ພົບກັບພວກເຂົາເພື່ອແບ່ງປັນຂອງປະທານຝ່າຍວິນຍານໃຫ້ພວກເຂົາໄດ້ເຂັ້ມແຂງຂຶ້ນ **(ໂຣມ1:11)**
ຄວາມເປັນຄົນຝ່າຍວິນຍານຂອງທ່ານ ສັງເກດໄດ້ຈາກຄວາມປາດຖະໜາຂອງທ່ານທີ່ມີຕໍ່ຊາວເອເຟໂຊ"ຂ້າພະເຈົ້າອະທິຖານວ່າຂໍພະເຈົ້າແຫ່ງພະເຢຊູຄຣິດເຈົ້າຂອງເຮົາ ຄືພະບິດາຜູ້ຊົງພະສິລິຊົງໂປດປະທານໃຫ້ທ່ານທັງຫລາຍ ມີຈິດໃຈອັນປະກອບດ້ວຍສະຕິປັນຍາ ແລະຄວາມປະຈັກແຈ້ງໃນເລື່ອງຄວາມຮູ້ເຖິງພະອົງ" **ເອເຟໂຊ 1:17**

ໃນດ້ານຊີວິດສ່ວນຕົວນັ້ນ ໂປໂລເຝົ້າລະວັງຢູ່ສະເໝີທີ່ຈະດຳເນີນຊີວິດໃຫ້ສົມກັບການຊົງເອີ້ນ ໂປໂລພະຍາຍາມດຳເນີນຊີວິດເພື່ອບໍ່ໃຫ້ເປັນທີ່ສະດຸດຂອງຜູ້ໃດ ທ່ານເປັນພະຍານຢືນຢັນວ່າທ່ານພະຍາຍາມທີ່ຈະ.." ທຳຕົວໃຫ້ເປັນທີ່ພໍໃຈຂອງຄົນທັງປວງໃນທຸກທາງ...ເພື່ອໃຫ້ເຂົາພົ້ນໄດ້" **(1ໂກຣິນໂທ10:33)**

ທ່ານກະຕຸ້ນເຕືອນຜູ້ເຊື່ອບໍ່ແມ່ນດຳເນີນຊີວິດຕາມຢ່າງໂລກ ແຕ່ໃຫ້ຮັບການປ່ຽນແປງຈິດໃຈ ແລະວິຖີຊີວິດເສັຽໃຫມ່**ໂຣມ 12:1–2**

ໂປໂລຕັ້ງວິໄນໄວ້ສຳລັບຕົນເອງໃຫ້ຈົດຈໍ່ຢູ່ທີ່ເລື່ອງຝ່າຍວິນຍານ ແລະຄວາມເປັນນິລັນດອນ "ເພາະວ່າເຮົາບໍ່ເຫັນແກ່ສິ່ງຂອງທີ່ເຮົາເຫັນຢູ່ ແຕ່ເຫັນແກ່ສິ່ງຂອງທີ່ເບິ່ງບໍ່ເຫັນ ເພາະວ່າສິ່ງຂອງທີ່ເບິ່ງເຫັນນັ້ນເປັນຂອງບໍ່ຢັ້ງຢືນ ແຕ່ສິ່ງຂອງທີ່ເບິ່ງບໍ່ເຫັນນັ້ນກໍຖາວອນນິລັນດອນ "
**2ໂກຣິນໂທ 4:18**

ມິນ ໄດ້ຢ້ຳເຖິງຄວາມສຳຄັນຂອງຊີວິດຝ່າຍວິນຍານຂອງຜູ້ນຳໄວ້ວ່າ

ຄວາມເຂັ້ມແຂງຝ່າຍວິນຍານຄືການຮູ້ຈັກພະເຈົ້າ ແລະດຳເນີນຊີວິດພາຍໃຕ້ສິດທິອຳນາດຂອງພະຄຳພີ ຜູ້ນຳທີ່ມີຄວາມເຂັ້ມແຂງຝ່າຍວິນຍານຈະສຳແດງເຖິງຄວາມເລົ່າຮ້ອນໃຈເພື່ອພັນທະກິດມີຄວາມກະຕືລືລົ້ນເພື່ອພະຄຣິດ ແລະມີຄວາມສັດຊື່ໃນການຮັກສາວິໄນຝ່າຍວິນຍານເປັນເລື່ອງໜ້າເສົ້າຫລາຍທີ່ສິດຍາພິບານຫລາຍຄົນເພິ່ງພາແຕ່ໃບຮັບຮອງ ແລະທຳນາດຂອງຕົນໃນຂະນະທີ່ຊີວິດຝ່າຍວິນຍານຂອງຕົນບໍ່ມີອັນໃດເຫລືອອີກແລ້ວ ຊາກຮ່າງກາຍທີ່ໝົດໄຟເຊັ່ນນັ້ນຍ່ອມບໍ່ມີອັນໃດທີ່ຈະຫຍິບຢື່ນໃຫ້ແກ່ຜູ້ຄົນຊຶ່ງຫິວກະຫາຍອາຫານແຫ່ງຊີວິດ ຄືຖ້ອຍຄຳຈາກຜູ້ຮັບໃຊ້ແທ້ຊຶ່ງມີຊີວິດສຳພັນສະໜິດກັບພະເຈົ້າ

ດ້ານຕ່າງໆທີ່ເຮົາຕ້ອງພັດທະນາໃນຊີວິດຝ່າຍວິນຍານຂອງເຮົາ

GCI

ກ) ບໍາລຸງຊີວິດດ້ວຍພະວັດຈະນະ
**ມັດທາຍ 4:4, ໂກໂລຊາຍ 3:16**
ພະເຈົ້າຕ້ອງການຜູ້ນໍາທີ່ມີໃຈຮັກພະທໍາຂອງພະອົງ
**ເພັງສັນລະເສີນ 119:97, 113 ແລະ 119**

ຂ) ການນະມັດສະການເປັນສ່ວນຕົວ
**ເພັງສັນລະເສີນ 33:1, 34:1, 63:4**

5. ທຸ້ມເທໃນການອະທິຖານ

ພະເຢຊູສໍາແດງໃຫ້ເຮົາເຫັນຢ່າງບໍ່ຕ້ອງສົງໄສເລີຍວ່າການອະທິຖານເປັນສິ່ງທີ່ສໍາຄັນໃນຊີວິດຂອງຜູ້ນໍາຄຣິສຕຽນ ພັນທະກິດຄຣິສຕຽນນັ້ນບໍ່ຄືງານຂອງອົງກອນທົ່ວໄປໃນໂລກ ເພາະເຮົາບໍ່ໄດ້ກ່ຽວພຽງແຕ່ງານດ້ານວັດຖຸ ແລະການເງິນເທົ່ານັ້ນ ແຕ່ຕ້ອງກ່ຽວຂ້ອງກັບງານຝ່າຍວິນຍານດ້ວຍ ດັ່ງນັ້ນໂປໂລຈຶ່ງໜູນໃຈຢູ່ສະເໝີໃຫ້ຜູ້ເຊື່ອທັງຫລາຍສັດຊື່ໃນການອະທິຖານ (**ໂຣມ 12:12**)

ໃນ**2ໂກຣິນໂທ 10:3-4** ໂປໂລບອກໄວ້ວ່າ ເພາະວ່າ ເຖິງແມ່ນວ່າເຮົາຢູ່ໃນໂລກກໍຈິງ ແຕ່ເຮົາກໍບໍ່ໄດ້ສູ້ລົບຕາມໂລກ ເພາະວ່າອາວຸດຂອງເຮົາບໍ່ເປັນຝ່າຍໂລກ ແຕ່ມີລິດເດດຈາກພະເຈົ້າອາດທໍາລາຍປ້ອມໄດ້

ນີ້ເປັນລັກສະນະປະການນຶ່ງທີ່ເຮົາເຫັນໄດ້ຊັດເຈນການອ່ານຂໍ້ຂຽນຂອງໂປໂລໃນພັນທະສັນຍາໃໝ່ ທ່ານບໍ່ໄດ້ພຽງແຕ່ໜູນໃຈໃຫ້ຜູ້ອື່ນອະທິຖານເທົ່ານັ້ນ ແຕ່ຕົວທ່ານເອງເປັນນັກອະທິຖານ

ກ) ໂປໂລ ເປັນນັກອະທິຖານນັບຕັ້ງແຕ່ຊ່ວງເລີ່ມທໍາອິດຂອງການເປັນຄຣິສຕຽນ “ເບິ່ງເຖີດ ເຂົາກໍາລັງອະທິຖານຢູ່” **(ກິດຈະການ 9:11)**

ຂ) ໂປໂລຮ່ວມຢູ່ໃນການອະທິຖານຂອງຄຣິສຕະຈັກທີ່ອັນຕິໂອເຂັຽ **(ກິດຈະການ 13:1-3)**

ຄ) ໂປໂລອະທິຖານຂະນະທີ່ຢູ່ໃນຄຸກເມືອງຟີລິບບອຍ **(ກິດຈະການ 16:25)**

## *ຈ. ຜູ້ນໍາທີ່ມີປະສິດທິພາບຕ້ອງເປັນຄົນທີ່ມີຄຸນລັກສະນະທີ່ດີ*

ແມ່ນຜູ້ນໍາຈະມີທັກສະໃນການບໍລິຫານທີ່ດີ ສາມາດບັນລຸເປົ້າໝາຍໃນທາງປະລິມານໄດ້ ແລະມີທັກສະໃນການປະຕິບັດຕໍ່ຜູ້ຄົນຢ່າງອົບອຸ່ນ ແຕ່ຖ້າເຂົາບໍ່ມີຄຸນລັກສະນະແຫ່ງຊີວິດອັນດີ ໃນທ້າຍທີ່ສຸດເຂົາກໍຈະຫລຸດພົ້ນໄປຈາກຕໍາແໜ່ງແຫ່ງຄວາມສໍາເລັດຂອງເຂົາໄດ້ ຜູ້ປະກາດຈິມມີ່ ແບກເກີ ແຫ່ງລາຍການພິທີແອລຄລັບເປັນກໍລະນີເດັ່ນຊັດ ທີ່ຊີ້ໃຫ້ເຮົາເຫັນວ່າຜູ້ນໍາທີ່ມີຄວາມສາມາດແຕ່ຂາດຄວາມຊື່ສັດໃນເລື່ອງເງິນທອງ ແລະດ້ານສິນລະທໍາ ໃນທີ່ສຸດກໍຈະເສື່ອມເສັຽຊື່ສຽງ

ໂປໂລເປັນຜູ້ນໍາທີ່ບໍ່ພຽງແຕ່ຈະປະກອບໄປດ້ວຍຄຸນສົມບັດຂອງການເປັນຜູ້ນໍາທີ່ມີປະສິດທິພາບເທົ່ານັ້ນ ແຕ່ທ່ານມີຄຸນລັກສະນະຊຶ່ງປັດສະຈາກຄວາມດ່າງພ້ອຍ ທ່ານເປັນບຸກຄົນທີ່ບໍ່ມີໃຜຕໍານິໄດ້ທັງໃນດ້ານສັງຄົມ

GCI

ແລະຄຸນສົມບັດດ້ານສິນລະທຳ ທີ່ຈິງເມື່ອໂປໂລເດີນທາງໄປເຖິງກຸງໂຣມແລ້ວຜູ້ນຳຊາວຢິວໄດ້ຕອບທ່ານວ່າ "ພວກເຮົາຫາໄດ້ຮັບຈົດໝາຍຈາກຢູເດັຽກ່າວເຖິງທ່ານ ຫລືບໍ່ມີພີ່ນ້ອງຜູ້ນຶ່ງຜູ້ໃດກ່າວຮ້າຍໃສ່ທ່ານ" **(ກິດຈະການ 28:21)**

ເຮົາອາດຈະມີທັກສະ ຫລືລັກສະນະຄວາມເປັນຜູ້ນຳໃນຕົວເພື່ອການເປັນຜູ້ນຳທີ່ມີປະສິດທິພາບ ແຕ່ໃນທ້າຍທີ່ສຸດເຮົາຕ້ອງມີຄຸນລັກສະນະແຫ່ງຊີວິດອັນປັດສະຈາກຄວາມດ່າງພ້ອຍເປັນເຄື່ອງສະໜັບສະໜູນຄວາມເປັນຜູ້ນຳຂອງເຮົາ

ບັນດາຜູ້ນຳທີ່ພະເຈົ້າຊົງໃຊ້ໃນພະຄຳພີ ເປັນຜູ້ທີ່ໄດ້ຮັບການເລືອກສັນ "ຄຸນລັກສະນະທີ່ດີ" ໂປໂລ ກ່າວໄວ້ຢ່າງຊັດເຈນເຖິງຄວາມສຳຄັນຂອງຄຸນລັກສະນະຊີວິດໃນຕົວຜູ້ທີ່ຈະໄດ້ຮັບການຄັດເລືອກເປັນຜູ້ນຳ **(1ຕີໂມທຽວ3:1-12)** ການໄດ້ຜູ້ນຳທີ່ມີປະສິດທິພາບຢ່າງດຽວນັ້ນບໍ່ພໍ ປະສິດທິພາບນັ້ນຈະຕ້ອງມີການຖ່ວງດຸນດ້ວຍຄຸນລັກສະນະອັນດີດ້ວຍ

ຄຳຖາມ "ຄຸນລັກສະນະຊີວິດ" ຄືອັນໃດ?

ແຟງ ຄາມາຊີໂອ ໄດ້ຈຳກັດຄວາມຄຳວ່າ "ຄຸນລັກສະນະຊີວິດ" ໄວ້ຢ່າງຊັດເຈນວ່າ

ກ) ຄຸນລັກສະນະ ຄືສ່ວນປະສົມຂອງຄຸນນະພາບ ຊຶ່ງເຮັດໃຫ້ຄົນນຶ່ງ ຫລືຂັ້ນໃດຂັ້ນນຶ່ງແຕກຕ່າງໄປຈາກຜູ້ອື່ນ

ຂ) ຄຸນລັກສະນະຈະປາກົດອອກມາໃນຊີວິດຂອງຄົນເຮົາ ເມື່ອຕົກຢູ່ພາຍໃຕ້ພາວະກົດດັນ

ຜູ້ນຳທີ່ມີປະສິດທິພາບຈະຂາດຄຸນລັກສະນະແຫ່ງຊີວິດທີ່ດີບໍ່ໄດ້ເລີຍ

1. ພະເຈົ້າຊົງຈັດການພັດທະນາຄຸນລັກສະນະແຫ່ງຊີວິດ
   **ເພັງສັນລະເສີນ 32:4-5**
   **ເພັງສັນລະເສີນ 119:67**
   **ເຮັບເລີ 12:7**
2. ຜູ້ນຳຂອງພະເຈົ້າສ່ວນໃຫຍ່ຈະຖືກພະເຈົ້າຈັດການພັດທະນາຄຸນລັກສະນະຊີວິດອັບລາຮາມໂມເຊເອລີຢາພະເຈົ້າຈຳເປັນຕ້ອງ ຈັດການກັບຄຸນລັກສະນະແຫ່ງຊີວິດ ຂອງເຮົາເພາະເຫດທີ່ເຮົາ ມີທຳມະ ຊາດຢູ່ໃນຕົວ ຕົວຢ່າງເຊັ່ນ ບາງຄັ້ງມີຄວາມບາບບາງຢ່າງເຊື່ອງຊ້ອນຢູ່ໃນຊີວິດຂອງຜູ້ເຊື່ອ ຄວາມບາບທີ່ເຊື່ອງຊ້ອນ ຢູ່ເປັນສິ່ງຂັດຂວາງເຮົາໄວ້ບໍ່ໃຫ້ກ້າວໜ້າໄປໃນການຮັບໃຊ້ ພະຄຳພີກ່າວວ່າຜູ້ເຊື່ອໃນພະເຈົ້າມີແນວໂນ້ມທີ່ຈະປົກປິດຄວາມບາບໄວ້

   ແຕ່ຜູ້ໃດຈະເລັ່ງເຫັນວ່າຄວາມຜິດພາດຂອງຕົນໄດ້ຂໍພະອົງຊົງຊຳລະຂ້າພະອົງໃຫ້ພົ້ນຈາກຄວາມຜິດທີ່ຊ້ອນຢູ່ **ເພັງສັນລະເສີນ 19:12**
   **ເພັງສັນລະເສີນ 90:8**
3. ຕົວຢ່າງຜູ້ຮັບໃຊ້ພະເຈົ້າທີ່ງານບໍ່ກ້າວໜ້າຫລືຫລົ້ມເຫລວເພາະຄວາມບາບທີ່ຊ້ອນຢູ່

   ກ) ກະສັດຊາອູນ **(1ຊາມູເອນ 10)** ເພາະເຫດທີ່ທ່ານມີວິນຍານທີ່ເປັນເອກເທດ ຈຶ່ງຕ້ອງສູນເສັຽຕຳແໜ່ງກະສັດໄປ ທ່ານຫລົງເຈີ່ນໄປຈົນເຖິງກັບຕ້ອງໄປຂໍຄຳປຶກສາຈາກຄົນຊົງ ແລະສຸດທ້າຍຕ້ອງຂ້າຕົວຕາຍ

GCI

ຂ) ກະສັດດາວິດ (1ຊາມູເອນ17, 2ຊາມູເອນ 11) ເພາະຕັນຫາຂອງເນື້ອໜັງ ທ່ານຈຶ່ງໄດ້ລ່ວງປະເວນີ ແລະທຳການຄາດຕະກຳຈົນເຮັດໃຫ້ທັງອິງຕະກຸນຕົກຢູ່ໃຕ້ການພິພາກສາ ຂອງພະເຈົ້າ

ຄ) ກະສັດຊາໂລມອນ **(2ພົງສາວະດານ 1:7-12)** ເພາະຄວາມຍຶ່ງຍຶດຄ່ານິຍົມຢ່າງໂລກ ແລະ ໝັ້ນໃຈໃນຕົວເອງ ທ່ານຈຶ່ງໄດ້ຫັນຈາກການຕິດຕາມພະເຈົ້າ ກາຍເປັນຄົນນະມັດສະການຮູບເຄົາລົບ ຈົນໃນທີ່ສຸດຕ້ອງສູນເສັຽຕໍ່ແນ່ງກະສັດໄປ

ງ) ແຊມຊັນ (**ຜູ້ວິນິສັຍ 14-16**) ເພາະຕັນຫາຂອງເນື້ອໜັງ ທ່ານຈຶ່ງຕ້ອງສູນເສັຽການຊົງເຈີມ ຖືກຄວດຕາ ແລະຖືກຄຸມຂັງຢູ່ໃນຄຸກ ໃນທ້າຍທີ່ສຸດທ່ານຕ້ອງຈົບຊີວິດໄປພ້ອມກັບພວກຟີລິດສະຕິນ

4. ຈຸດປະສົງທີ່ພະເຈົ້າຈັດການກັບຄຸນລັກສະນະຊີວິດ

ກ) ເພື່ອເຮັດໃຫ້ເຮົາປ່ຽນແປງເໝືອນພະສາຍາຂອງພະຄຣິດ
**2ໂກຣິນໂທ 3:16**

ຂ) ເພື່ອເຮັດໃຫ້ເຮົາເກີດຜົນ
**ໂຢຮັນ 15:1-2**

ຄ) ເພື່ອຕຽມເຮົາໃຫ້ພ້ອມສຳລັບງານຮັບໃຊ້
**2ຕີໂມທຽວ 2:20-21**

5. ຜູ້ນາທີ່ມີຄຸນລັກສະນະຊີວິດທີ່ດີ ຈະມີລັກສະນະດັ່ງຕໍ່ໄປນີ້

ຄວາມຊື່ຕົງອາດຈຳກັດຄວາມໄດ້ວ່າ ເປັນການອຸທິດຕົວໃຫ້ແກ່ຄວາມຈິງ ແລະເປັນການທຸ້ມເທຊີວິດເພື່ອຈະລິຍະທຳ ສິນລະທຳອັນດີ ຄຸນນະທຳ ເປັນການຫລີກເວັ້ນຈາກການໜ້າຊື່ໃຈຄົດ ແລະການບັງຄັບໃຈຜູ້ອື່ນເພື່ອຫາປະໂຫຍດໃສ່ຕົວ

ກ) ຄວາມຊື່ຕົງ

ການຂາດຄວາມຊື່ຕົງໃນຊີວິດຂອງຜູ້ນຳ ຈະເຮັດໃຫ້ຜູ້ຕາມເສື່ອມສັດທາ ແລະທຳລາຍຄວາມເຊື່ອໝັ້ນ ເປັນສິ່ງສຳຄັນທີ່ຜູ້ນຳຕ້ອງມີທ່າທີທີ່ບໍລິສຸດ ແລະສາມາດເຮັດຕາມສິ່ງທີ່ຕົນສັນຍາໄວ້ ປະຫວັດສາດສອນໃຫ້ເຮົາຮູ້ວ່າເມື່ອຜູ້ນຳຍອມປານີປານອມໃນເລື່ອງຄວາມຊື່ຕົງ ມັນຈະນຳມາຊຶ່ງຄວາມຜິດຫວັງ ແລະການແຕກແຍກໃນກຸ່ມຜູ້ຕາມ

ໃນເລື່ອງຂອງຄວາມສຳພັນສ່ວນຕົວນັ້ນ ເຮົາຈະເຫັນວ່າໂປໂລມີມາດຕະຖານທາງຈະລິຍະທຳທີ່ເຄັ່ງຄັດ**1ຕີໂມທຽວ 5:1-2**

ໂປໂລເປັນຄົນທີ່ມຸ້ງໝັ້ນທີ່ຈະດຳເນີນຊີວິດໂດຍມີຈິດສຳນຶກວ່າຕົນຊອບຢູ່ສະເໝີ (**1ໂກຣິນໂທ 4:4)** ໂປໂລຢ້ຳວ່າທ່ານລັງກຽດການໃຊ້ອຸບາຍຫລອກລວງ ຫລືການພິກແພງພະວັດຈະນະຂອງພະເຈົ້າ **(2ໂກຣິນໂທ 4:2)** ໂປໂລຈະລະມັດລະວັງເປັນພິເສດເມື່ອຕ້ອງຈັດການດູແລເລື່ອງເງິນທອງ
**2ໂກຣິນໂທ 8:19-21**

GCI

ກິດຈະການ20:33–34

1ຕີໂມທຽວ 3:3

ໂຣມ 13:8

ຂ) ຮູບແບບການດຳເນີນຊີວິດທີ່**ເປັນແບບຢ່າງ**

ເປັນສິ່ງສຳຄັນຍິ່ງທີ່ຜູ້ນຳຈະຕ້ອງດຳເນີນຊີວິດທີ່ເປັນແບບຢ່າງ ໂປໂລໄດ້ໃຫ້ການທ້າທາຍອັນຍິ່ງໃຫຍ່ແກ່ເຫລົ່າ ເມື່ອທ່ານກ່າວວ່າ "ທ່ານທັງຫລາຍກໍຈົ່ງປະຕິບັດຕາມຢ່າງຂ້າພະເຈົ້າ ເໝືອນຢ່າງທີ່ຂ້າພະເຈົ້າປະຕິບັດຕາມຢ່າງພະຄຣິດ" **(1ໂກຣິນໂທ 11:1)**

ມີຜູ້ນຳນ້ອຍຫລາຍທີ່ກ້າກ່າວທ້າທາຍຜູ້ຕິດຕາມຂອງເຂົາເຊັ່ນນີ້ ທ່ານເປັນຜູ້ນຳທີ່ປະພຶດຕາມສິ່ງທີ່ຕົນເອງເທດສະໜາ

-ທ່ານບໍ່ໄດ້ພຽງແຕ່ບອກໃຫ້ຜູ້ເຊື່ອທັງຫລາຍວ່າ "ຈົ່ງຊື່ນຊົມຍິນດີໃນອົງພະຜູ້ເປັນເຈົ້າທຸກເວລາ ຂ້າພະເຈົ້າຂໍຢໍ້າອີກຄັ້ງວ່າຈົ່ງຊື່ນຊົມຍິນດີເຖີດ" (**ຟີລິບບອຍ 4:4**) ແຕ່ເມື່ອທ່ານຕ້ອງຖືກຈຳຢູ່ໃນຄຸກເຮົາໄດ້ເຫັນທ່ານສະແດງຄວາມຊື່ນຊົມຍິນດີໃນພະຜູ້ເປັນເຈົ້າ **(ກິດຈະການ 16:25)**

- ທ່ານໄດ້ວາງແບບຢ່າງໃນເລື່ອງຄວາມຂະຫຍັນຂັນແຂງ"

- ໃນການພຽນລໍອົດທົນຕໍ່ຄວາມທຸກຍາກ **2ໂກຣິນໂທ 11:23–27**

- ໃນການອະທິຖານເພື່ອທຳມິກະຊົນຢູ່ສະເໝີ **ຟີລິບບອຍ 1:3–4**

- ໃນການຈັດການດູແລເງິນທອງຢ່າງຮອບຄອບ **2ໂກຣິນໂທ 8:21**

**ຟີລິບບອຍ 4:9** "ຈົ່ງເຮັດທຸກສິ່ງທີ່ທ່ານໄດ້ຮຽນຮູ້ ແລະໄດ້ຮັບໄວ້ໄດ້ຍິນ ແລະໄດ້ເຫັນໃນຂ້າພະເຈົ້າແລ້ວ ແລະພະເຈົ້າແຫ່ງສັນຕິສຸກຈະຊົງສະຖິດກັບທ່ານ"

ແຊນເດີ ຕັ້ງຂໍ້ສັງເກດໄວ້ດັ່ງຕໍ່ໄປນີ້

ໂປໂລສາມາດກະຕຸ້ນໃຫ້ເພື່ອນຮ່ວມງານຄົນໜຸ່ມຂອງເຂົາວ່າ "ຈົ່ງມີສ່ວນໃນການຍາກລຳບາກ" (2ຕີໂມທຽວ 1:8) ທ່ານເຮັດໄດ້ກໍເພາະທ່ານເອງກໍພ້ອມທີ່ຈະເຮັດຢ່າງດຽວກັນ ທ່ານໄດ້ວາງ ແບບຢ່າງໄວ້ແລ້ວ

ບັນດາທະຫານຜ່ານສຶກຂອງອະເລັດຊານເດີ ມາຫາຣາຊພາກັນຈົ່ມວ່າພະອົງບໍ່ຊົງ ສົນພະໄທໃນຄວາມທຸກຍາກລຳບາກ ແລະບາດແຜຂອງພວກເຂົາເລີຍ ແຕ່ພະອົງໄດ້ຂຶ້ນໄປຢືນເທິງແທ່ນ ແລະກ່າວກັບທະຫານທີ່ຂຸ່ນເຄືອງເຫລົ່ານັ້ນວ່າ "ເອົາລະໃຜທີ່ມີບາດແຜ ເປີດອອກມາໃຫ້ເຮົາເບິ່ງ ແລ້ວເຮົາຈະເອົາບາດແຜຂອງເຮົາໃຫ້ເບິ່ງ ບໍ່ມີສ່ວນໃດໃນຮ່າງກາຍຂອງເຮົາທີ່ບໍ່ມີຮອຍແຜ ເຮົາຖືກຟັນດ້ວຍດາບ ຖືກຍິງດ້ວຍທະນູ ແລະລູກກະສູນ ເຮົາຖືກຂ້ວາງດ້ວຍກ້ອນຫີນ ແລະຖືກຫວດດ້ວຍກະບອງ ໃນຂະນະທີ່ນຳພາພວກເຈົ້າທັງຫລາຍໄປສູ່ໄຊຊະນະ ແລະສັກສີ"

ໂປໂລ ຜູ້ພິຊິດທີ່ຍິ່ງໃຫຍ່ກວ່າອະເລັກຊານເດີມະຫາຣາຊ ສາມາດກ່າວຖ້ອຍຄຳເຊັ່ນດຽວກັນນີ້ໄດ້ "ຕັ້ງແຕ່ນີ້ໄປຂໍຢ່າໃຫ້ຜູ້ໃດມາລົບກວນຂ້າພະເຈົ້າເລີຍ ເພາະວ່າຂ້າພະເຈົ້າມີຮອຍປະທັບຕາຂອງພະເຢຊູ ຕິດຢູ່ທີ່ກາຍຂອງຂ້າພະເຈົ້າແລ້ວ" **(ຄາລາເຕັຽ 6:17**

GCI

ມີນ ໄດ້ຕັ້ງຂໍ້ສັງເກດໄວ້ດ້ວຍວ່າ ໂປໂລໄດ້ທຳງານໜັກເພື່ອລ້ຽງດູຕົນເອງ ແລະວາງແບບຢ່າງໄວ້ໃຫ້ແກ່ບັນດາຜູ້ເຊື່ອທັງຫລາຍໄດ້ເຮັດຕາມ

ໂປໂລຕະໜັກເຖິງຄວາມຮັບຜິດຊອບຂອງທ່ານໄດ້ດ້ານນີ້ເປັນຢ່າງດີຈົນກະທັ້ງທ່ານ "ໄດ້ເຮັດການໜັກດ້ວຍຄວາມພາກພຽນທັງກາງເວັນ ແລະກາງຄືນ ເພື່ອຈະບໍ່ເປັນພາລະແກ່ຄົນນຶ່ງຄົນໃດ.. ບໍ່ແມ່ນເພາະທ່ານບໍ່ມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫລືອ ແຕ່ວ່າເພື່ອເຮັດເປັນແບບຢ່າງໃຫ້ທ່ານທັງຫລາຍເຮັດຕາມ" 2ເທຊະໂລນິກ 3:8-9

ດ້ານອື່ນໆທີ່ຜູ້ນຳຕ້ອງວາງຕົວເປັນແບບຢ່າງດ້ວຍ ໄດ້ແກ່

- ຊີວິດທາງດ້ານອາລົມ

ອາລົມຂອງທ່ານເປັນຢ່າງໃດແດ່? ຄືລະເບີດ? ຫລືຄືນິວເຄັຽ? ລູກໆຕ້ອງພາກັນໜີໄປໝົດຫລືບໍ່ ຖ້າທ່ານໂມໂຫ?

1ຕີໂມທຽວ 3:2 "ຮູ້ຈັກບັງຄັບຕົນ"

2ຕີໂມທຽວ 2:24 ບັນດາຜູ້ຮັບໃຊ້ຂອງອົງພະຜູ້ເປັນເຈົ້ານັ້ນ ຈະຕ້ອງບໍ່ເປັນຄົນມັກທະເລາະວິວາດ

-ຊີວິດຄອບຄົວ 1ຕີໂມທຽວ 3:4-5

ຊີວິດສ່ວນຕົວໃນຄອບຄົວຂອງຜູ້ນຳນັ້ນຈະເປັນພື້ນຖານສຳລັບພັນທະກິດຂອງເຂົາໃນຄອບຄົວຂອງພະ ເຈົ້າກ່ອນສິ່ງອື່ນໃດຜູ້ນຳຕ້ອງດູແລຄອບຄົວຂອງຕົນໃຫ້ເປັນລະບຽບຊື່ງຈະຂຶ້ນຢູ່ກັບຄຸນລັກສະນະຂອງເຂົາ ເພາະຖ້າປັດສະຈາກຄຸນລັກສະນະທີ່ດີເຂົາຍ່ອມຈະບໍ່ປະສົບຄວາມສຳເລັດໃນຊີວິດຄອບຄົວ

- ຄົນໜຸ່ມຄົນສາວ ເຈົ້າເຊື່ອຟັງ ແລະຍອມຢູ່ໃຕ້ອຳນາດຂອງບິດາມານດາຫລືບໍ່?

- ຜູ້ເປັນພໍ່ ທ່ານເປັນຜູ້ຄວບຄຸມລູກໆ ຫລືລູກໆກຳລັງຄວບຄຸມທ່ານ?

-ຜູ້ເປັນພັນລະຍາ ທ່ານຍອມຢູ່ໃຕ້ອຳນາດຂອງສາມີຫລືບໍ່?

- ຜູ້ເປັນສາມີ ທ່ານມີຄວາມຮັກຕໍ່ພັນລະຍາຄືຢ່າງທີ່ພະຄຣິດຮັກຄຣິສຕະຈັກຫລືບໍ່?

ໃນຄອບຄົວມີຄວາມເປັນນ້ຳນຶ່ງໃຈດຽວກັນຫລືບໍ່?

ມານຮ້າຍກຳລັງທຳການໂຈມຕີຄອບຄົວຂອງບັນດາຜູ້ນຳທັງຫລາຍ ການເປັນນ້ຳນຶ່ງໃຈດຽວ ກັນນັ້ນນຳພະພອນຍິ່ງໃຫຍ່ມາສູ່ຄອບຄົວ **ເພງສັນລະເສີນ 13:3**

## *ສ. ຜູ້ນຳທີ່ມີປະສິດທິພາບ<u>ຕ້ອງເປັນຜູ້ທີ່ມີອຸປະນິສັຍທີ່ດີ</u>*

ຜູ້ນຳຈະຕ້ອງສຳແດງເຖິງຄຸນລັກສະນະດັ່ງຕໍ່ໄປນີ້

1. <u>ມີວິນັຍ</u>

ການທີ່ຜູ້ນຳຄຣິສຕຽນຫລາຍຄົນຫລົ້ມເຫລວ ຫລາຍຄັ້ງພົບວ່າເປັນເພາະ ການຂາດວິໄນຊີວິດທັງໃນດ້ານການອະທິຖານ ການສາມັກຄີທຳ ການຮັບປະທານອາຫານ ແລະລະບົບຄວາມຄິດພະເຢຊູຜູ້ຊົງເປັນຜູ້ນຳຊົງເປັນຜູ້ທີ່ມີວິໄນ ພະອົງຊົງຕື່ນແຕ່ເຊົ້າມືດເພື່ອໄປອະທິຖານ **(ມາຣະໂກ 1:35**)

GCI

ໃນ **1ໂກຣິນໂທ 9:26-27** ເຮົາພົບວ່າໂປໂລເປັນຜູ້ທີ່ມີວິໄນຢ່າງຍິ່ງສ່ອນຂ້າພະເຈົ້າແລ່ນແຂ່ງໂດຍມີເປົ້າໝາຍ ຂ້າພະເຈົ້າບໍ່ໄດ້ຕໍ່ສູ້ຢ່າງນັກມວຍທີ່ຊົກລົມ ແຕ່ຂ້າພະເຈົ້າກໍທຸບຕີຮ່າງກາຍໃຫ້ມັນແຂງຈົນຢູ່ມື ເພາະຢ້ານວ່າເມື່ອຂ້າພະເຈົ້າໄດ້ປະກາດຂ່າວປະເສີດແກ່ຄົນອື່ນແລ້ວ ຕົວຂ້າພະເຈົ້າເອງຈະເປັນຄົນທີ່ໃຊ້ການບໍ່ໄດ້

ໂປໂລບໍ່ໄດ້ເປັນພຽງຜູ້ທີ່ສຳແດງເຖິງວິໄນຝ່າຍກາຍເທົ່ານັ້ນ ແຕ່ທ່ານຍັງມີວິໄນໃນການຄວບຄຸມລະບົບການຄິດຂອງຕົນເອງດ້ວຍຄືທຳລາຍຄວາມຄິດທີ່ມີເຫດຜົນຈອມປອມ ແລະສິດທິມານະທຸກປະການ ທີ່ຕັ້ງຕົວຂຶ້ນຂັດຂວາງຄວາມຮູ້ຂອງພະເຈົ້າ ແລະນ້ອມນຳຄວາມຄິດທຸກປະການໃຫ້ເຂົ້າຢູ່ໃຕ້ບັງຄັບຈົນເຖິງຮັບຟັງພະຄຣິດ **2ໂກຣິນໂທ 10:5**

ຜູ້ນຳທີ່ມີປະສິດທິພາບນັ້ນຈັດການກັບເວລາໄດ້ດີ ເຫັນໄດ້ຊັດເຈນວ່າໂປໂລເປັນຜູ້ທີ່ເຊື່ອໃນການບໍລິຫານເວລາ ບໍ່ແມ່ນປ່ອຍໃຫ້ສິ່ງອັນມີຄ່ານີ້ຕ້ອງສູນເສັຽໄປ ໂປໂລໄດ້ຂຽນໜູນໃຈຊາວເອເຟໂຊວ່າ "ຈົ່ງສວຍໂອກາດ ເພາະວ່າທຸກວັນນີ້ເປັນການທີ່ຊົ່ວ" **ເອເຟໂຊ 5:16**

ໂປໂລບໍ່ປະສົງໃຫ້ໃຜໃຊ້ເວລາໄປກັບສິ່ງທີ່ສູນເປົ່າ ຫລືບໍ່ເກີດ ປະໂຫຍດຢັ້ງຢືນ ດັ່ງນັ້ນທ່ານຈຶ່ງໄດ້ໜູນໃຈໃຫ້ພວກເຂົາໄດ້ເຮັດຄວາມເຂົ້າໃຈກັບນ້ຳພະໄທຂອງພະເຈົ້າໃນຊີວິດຂອງຕົນບໍ່ແມ່ນເສັຽເວລາ ຫລືໃຊ້ຊີວິດໄປກັບຄວາມເມົາມາຍ (**ເອເຟໂຊ 5:17-18)**

ໂປໂລເປັນຜູ້ທີ່ຮູ້ຈັກສວຍໂອກາດໃຊ້ເວລາຂອງຕົນຢ່າງເຕັມທີ່ໃນຂະ ນະທີ່ຢູ່ໃນຄຸກທ່ານໄດ້ຂຽນໜັງສືໄປຍັງຜູ້ເຊື່ອທັງຫລາຍ ເຊັ່ນຕີໂມທຽວ ແລະຊາວຟີລິບບອຍໂປໂລຕ້ອງການ ໃຊ້ເວລາຂອງຕົນຢ່າງຄົນມີປັນຍາ ທ່ານຈຶ່ງກຳຊັບໃຫ້ຕີໂມທຽວນຳໜັງສືມ້ວນ ແລະໜັງສືທີ່ຂຽນເທິງແຜ່ນໜັງ ໄປໃຫ້ທ່ານດ້ວຍ(**2ຕີໂມທຽວ 4:13**)
**ສຸພາສິດ 6:6-11**

## 2. <u>ເປັນນັກອ່ານທີ່ດີ</u>

ຜູ້ນຳທີ່ສະຫລາດຍ່ອມຕ້ອງການເພີ້ມພູນຄວາມຮູ້ໃສ່ຕົນເອງ ວິທີນຶ່ງທີ່ຈະຊ່ວຍໄດ້ກໍຄືການຮູ້ຈັກອ່ານໜັງສືໃຫ້ຫລາຍໆ ເຮົາຢູ່ໃນຍຸກທີ່ຄຳສອນ ແລະຄຳແນະນຳທີ່ດີໆ ຖືກບັນທຶກໄວ້ໃນຮູບສິ່ງພິມ **ສຸພາສິດ 9:9** ບອກເຮົາວ່າ "ຈົ່ງໃຫ້ຄຳສັ່ງສອນແກ່ນັກປັສຍາແລະເຂົາຈະສະຫລາດຍິ່ງຂຶ້ນ ຈົ່ງສອນຄົນຊອບທຳ ແລະເຂົາຈະເພີ້ມການ ຮຽນຮູ້ຫລາຍຂຶ້ນ"

ໂປໂລເປັນນັກອ່ານທີ່ດີ ໃນຄຳກ່າວ ແລະຂໍ້ຂຽນຂອງທ່ານ ສະທ້ອນໃຫ້ເຮົາເຫັນເຖິງຂໍ້ອ້າງອີງຕ່າງໆ ທີ່ເປັນຄຳກ່າວຂອງນັກປັດສະຍາໃນຍຸກຂອງທ່ານ(**ກິດຈະການ17:28)**

ຄວາມຮັກການອ່ານຂອງໂປໂລບໍ່ໄດ້ລົດນ້ອຍລົງເລີຍແມ່ນທ່ານຈະມີອາຍຸຫລາຍຂຶ້ນທ່ານໄດ້ກຳຊັບໃຫ້ຕີໂມທຽວເອົາ ໜັງສື ແລະສິ່ງທີ່ສຳຄັນທີ່ສຸດຄືໜັງສືທີ່ຂຽນເທິງແຜ່ນໜັງ" ໄປໃຫ້ທ່ານດ້ວຍເມື່ອເຂົາໄປຢ້ຽມທ່ານ **(2ຕີໂມທຽວ 4:13)**

GCI

## ຂ. ຜູ້ນຳທີ່ມີປະສິດທິພາບຕ້ອງເປັນຄົນທີ່ສາມາດບັນລຸເປົ້າໝາຍໃນທາງຄຸນນະພາບໄດ້

ການທີ່ຈະບັນລຸເປົ້າໝາຍໃນທາງຄຸນນະພາບເຊັ່ນ ຈະເລີນຂຶ້ນໃນຄວາມຮັກ ຄວາມອົດທົນ ພະຄຸນໄດ້ນັ້ນ ຜູ້ນຳຈະຕ້ອງເປັນຜູ້ມີຄວາມພຽນພະຍາຍາມ ເປົ້າໝາຍໃນທາງ ຄຸນນະພາບບາງຢ່າງນັ້ນອາດ ໃຊ້ເວລານານ ຫລາຍ ກວ່າທີ່ຜູ້ນຳຈະເບິ່ງເຫັນຜົນຂອງມັນ ນອກຈາກນີ້ຜູ້ນຳຈະຕ້ອງມີຄວາມຮ້ອນ ຮົນໃນການທຳງານຄວບຄູ່ໄປກັບຄວາມພຽນພະຍາຍາມດ້ວຍ ເຮົາຈຳເປັນຕ້ອງມີຄວາມຮ້ອນຮົນເປັນຢ່າງຍິ່ງໃນການທຳງານໂດຍສະເພາະຢ່າງຍິ່ງໃນຍາມທີ່ເຮົາບໍ່ຄ່ອຍເຫັນຜົນເກີດຂຶ້ນ ເຖິງແມ່ນການບັນລຸເປົ້າໝາຍໃນທາງ ຄຸນນະພາບເປັນສິ່ງທີ່ເພິ່ງປາດຖະໜາສຳລັບຜູ້ນຳຄຣິສຕະຊົນ
ແຕ່ເຮົາກໍບໍ່ຄວນຍົກເລື່ອງນີ້ມາເປັນຂໍ້ອ້າງເພື່ອຈະບໍ່ຕ້ອງບັນລຸສູ່ເປົ້າໝາຍໃນທາງປະລິມານ

ໂປໂລເປັນຜູ້ນຶ່ງຊຶ່ງຖືໄດ້ວ່າເປັນຜູ້ນຳທີ່ມີປະສິດທິພາບ ຖ້າຈະວັດກັນເທິງພື້ນຖານຂອງຄຸນນະພາບ ໂປໂລເຮັດໃຫ້ເກີດຄວາມຈະເລີນໃນຄວາມເຊື່ອໃນສະຖານທີ່ຕ່າງໆທີ່ທ່ານກະທຳການ ດັ່ງທີ່ໄດ້ບັນທຶກໄວ້ໃນ**ກິດຈະການ 16:5** "ຄຣິສຕະຈັກທັງປວງຈຶ່ງເຂັ້ມແຂງໃນຄວາມເຊື່ອ.." ຄຣິສຕະຈັກໃນໂກຣິນໂທ ໄດ້ຈະເລີນ ຂຶ້ນໃນຄວາມເປັນນ້ຳນຶ່ງໃຈດຽວກັນ ແລະໃນຄວາມຮັກ ຫລັງຈາກທີ່ໄດ້ຮັບຄຳເຕືອນສອນ ແລະການວ່າກ່າວຈາກໂປໂລ ໂປໂລໄດ້ພັດທະນາຄວາມສຳພັນກັບສາວົກຂອງທ່ານເພື່ອນຳໃຫ້ພວກເຂົາຈະເລີນຂຶ້ນໃນຄວາມເປັນຜູ້ໃຫຍ່

ເພື່ອໃຫ້ບັນລຸເປົ້າໝາຍໃນທາງຄຸນນະພາບ ໂປໂລໄດ້ສຳແດງຄຸນລັກສະນະດັ່ງຕໍ່ໄປນີ້

1. ມີຄວາມພຽນພະຍາຍາມ

   **ໂຣມ 5:3-4** ບອກເຮົາວ່າຄວາມທຸກເຮັດໃຫ້ເຮົາມີຄວາມພຽນອົດທົນ ມີຄຸນລັກສະນະຊີວິດທີ່ດີ ແລະມີຄວາມຫວັງໃຈ ການທີ່ເຮົາຈະເອົາຊະນະບັນຫາ ແລະຄວາມຍາກລຳບາກໄດ້ນັ້ນ ເຮົາຕ້ອງມີຄວາມພຽນພະຍາຍາມ ແລະບໍ່ທໍ້ໃຈ **ເຮັບເລີ 11:27** ໄດ້ບັນຍາຍລັກສະນະຂອງໂມເຊຜູ້ຮັບໃຊ້ພະເຈົ້າໄວ້ວ່າເປັນຜູ້ທີ່ມີຄວາມພຽນອົດທົນ ພະເຢຊູໄດ້ກ່າວໄວ້ໃນຄຳອຸປະມາເລື່ອງຜູ້ຫວ່ານພືດວ່າ ຜູ້ທີ່ຈະເກີດຜົນໄດ້ນັ້ນຕ້ອງເປັນຜູ້ທີ່ມີຄວາມພຽນ (**ລູກາ 11:27**) **ຢາໂກໂບ 1:12,** ໄດ້ກ່າວເຖິງພະພອນທີ່ຈະເກີດຂຶ້ນ ເມື່ອເຮົາໄດ້ພຽນອົດທົນໃນການທົດລອງໃຈແລະຄວາມຍາກລຳບາກ

   ໂປໂລເປັນຜູ້ນຳທີ່ສຳແດງເຖິງຄວາມພຽນຢ່າງສູງຍິ່ງ ແມ່ນຕ້ອງປະເຊີນກັບການທົດລອງໃຈ ແລະຄວາມຍາກລຳບາກແຕ່ທ່ານກໍບໍ່ຍອມແພ້ ໂປໂລໄດ້ກ່າວເຖິງການທົນທຸກບາງຢ່າງຂອງທ່ານໄວ້ໃນ
   **2ໂກຣິນໂທ 11:23-28**

   - ຕິດຄຸກເລື້ອຍໆ
   - ຖືກຕີຢ່າງທາລຸນ
   - ຖືກຂ້ຽນ 5 ຄັ້ງໆ ລະ 39ເທື່ອ
   - ຖືຕີດ້ວຍກະບອງ 3ຄັ້ງ
   - ຖືກຫີນຂ້ວາງນຶ່ງຄັ້ງ
   - ເຮືອຫລົ້ມ 3 ຄັ້ງ
   - ຖືກໂຈນປຸ້ນ ແລະພວກຢິວຫົວຮຸນແຮງທຳຮ້າຍ
   - ອົດນອນ ອົດເຂົ້າ ແລະນໍ້າຢູ່ເລື້ອຍໆ
   - ເປັນທຸກໜັກເພາະຄວາມກັງວົນທີ່ມີຕໍ່ຄຣິສຕະຈັກຕ່າງໆ

GCI

ການທີ່ຈະຜ່ານການທົດລອງໃຈ ແລະຄວາມທຸກຍາກດັ່ງທີ່ໂປໂລໄດ້ກ່າວ ໄວ້ຂ້າງຕົ້ນນີ້ຍ່ອມຕ້ອງອາໄສຄວາມພຽນອົດທົນເປັນຢ່າງຍິ່ງ ນອກເໜືອຈາກສິ່ງເຫລົ່ານີ້ແລ້ວ ໂປໂລຍັງຕ້ອງເອົາຊະນະຄຳວິພາກ ວິຈານຢ່າງບໍ່ຢຸດຕິທຳຈາກຄົນທີ່ຕໍ່ຕ້ານທ່ານອີກດ້ວຍ ໃນບັ້ນປາຍຊີວິດຂອງທ່ານ ເມື່ອຂຽນໜັງສືເຖິງຕີໂມທຽວ ໂປໂລໄດ້ກ່າວດ້ວຍຄວາມໝັ້ນໃຈວ່າທ່ານໄດ້ສູ້ພຽນອົດທົນ "ຂ້າພະເຈົ້າໄດ້ຕໍ່ສູ້ຢ່າງເຕັມກຳລັງຂ້າພະເຈົ້າໄດ້ແຂ່ງຂັນຈົນເຖິງທີ່ສຸດຂ້າພະເຈົ້າໄດ້ຮັກສາຄວາມເຊື່ອໄວ້ແລ້ວ" **2ຕີໂມທຽວ4:7**

2. **<u>ມີໃຈຮ້ອນຮົນໃ</u>**ນການທຳງານ

ຄຸນລັກສະນະຂໍ້ນີ້ຄືສິ່ງທີ່ນຳຄວາມກະຕືລືລົ້ນ ແລະຄວາມມີຊີວິດຊີວາມາສູ່ການງານ ຫລືພັນທະກິດຂອງຜູ້ນຳ ຫາກປັດສະຈາກຄຸນລັກສະນະປະການນີ້ ຜູ້ນຳຈະທຳການຢ່າງບໍ່ມີຊີວິດຈິດໃຈ ບໍ່ມີຄວາມກະຕືລືລົ້ນ ແລະຮ້ອນຮົນ ຊຶ່ງຈະເປັນຜົນກະທົບຕໍ່ຜູ້ຄົນທີ່ຢູ່ລ້ອມຮອບເຂົາຢ່າງແນ່ນອນ

ຄວາມຮ້ອນຮົນໃຈຂອງໂປໂລທີ່ມີຕໍ່ງານພະເຈົ້ານັ້ນເຫັນໄດ້ຊັດເຈນຈາກຖ້ອຍຄຳທີ່ທ່ານໃຊ້ໃນຂໍ້ພະຄຳພີຕໍ່ໄປນີ້

ປະການທຳອິດ ຂ້າພະເຈົ້າຂໍຂອບພະຄຸນພະເຈົ້າຂອງຂ້າພະເຈົ້າ ໂດຍທາງພະເຢຊູຄຣິດ ເຫດດ້ວຍທ່ານ ທັງຫລາຍເພາະວ່າຄວາມເຊື່ອຂອງພວກທ່ານເລື່ອງລືໄປທົ່ວໂລກ ເພາະພະເຈົ້າຜູ້ຊຶ່ງຂ້າພະເຈົ້າໄດ້ຮັບໃຊ້ ດ້ວຍຊີວິດຈິດໃຈຂອງຂ້າພະເຈົ້າໃນການປະກາດຂ່າວປະເສີດເລື່ອງພະບຸດຂອງພະອົງນັ້ນ ຊົງເປັນພະຍານຂອງຂ້າພະເຈົ້າວ່າ ເມື່ອຂ້າພະເຈົ້າອະທິຖານນັ້ນ ຂ້າພະເຈົ້າລະລຶກເຖິງທ່ານທັງຫລາຍສະ ເໝີບໍ່ວ່າງເວັ້ນຂ້າພະ ເຈົ້າທູນຂໍວ່າ ຖ້າເປັນທີ່ພໍພະໄທພະເຈົ້າແລ້ວໃຫ້ຂ້າພະເຈົ້າໄດ້ມີໂອກາດໄປຢ້ຽມທ່ານ ທັງຫລາຍ ໂດຍຢ່າງນຶ່ງຢ່າງໃດໃນທີ່ສຸດນີ້ ເພາະຂ້າພະເຈົ້າປາດຖະໜາທີ່ຈະໄດ້ພົບທ່ານທັງຫລາຍ ເພື່ອຈະໄດ້ນຳຂອງປະທານຝ່າຍວິນຍານຈິດມາໃຫ້ແກ່ທ່ານເພື່ອເສີມກຳລັງທ່ານທັງຫລາຍ **ໂຣມ 1:8-11**

ການທີ່ທ່ານປົນນິບັດພະເຈົ້າດ້ວຍ "ຊີວິດຈິດໃຈ" ແລະ"ຄວາມປາດຖະນາທີ່ຈະໄດ້ພົບ" ຜູ້ເຊື່ອທີ່ຢູ່ໃນກຸງໂຣມນັ້ນສຳແດງໃຫ້ເຫັນຢ່າງຊັດເຈນເຖິງຄວາມຮ້ອນຮົນຂອງໂປໂລ ຄວາມຮ້ອນໃຈຂອງໂປໂລ ເພື່ອຈິດວິນຍານທີ່ຫລົງຫາຍນັ້ນຍັງໄດ້ປາກົດໃຫ້ເຫັນໃນຂໍ້ພະຄຳພີຕໍ່ໄປນີ້ດ້ວຍ "ເພາະເຖິງແມ່ນວ່າຂ້າພະເຈົ້າບໍ່ໄດ້ຢູ່ໃນບັງຄັບຂອງຜູ້ໃດ ຂ້າພະເຈົ້າກໍຍັງຍອມຕົວເປັນທາດຮັບໃຊ້ຄົນທັງປວງ ເພື່ອຈະໄດ້ຊະນະໃຈຄົນຫລາຍຍິ່ງຂຶ້ນ" **1ໂກຣິນໂທ 9:19**

ໂປໂລບໍ່ແມ່ນຜູ້ທີ່ຄອຍຕຳນິຄົນທີ່ກະທຳຜິດໂດຍບໍ່ມີຄວາມຮັກຫລືນ້ຳໃຈ "ເພາະວ່າຂ້າພະເຈົ້າຂຽນໜັງສືເຖິງທ່ານ ເພາະຂ້າພະເຈົ້າມີຄວາມທຸກລະທົມໃຈຫລາຍ ແລະນ້ຳຕາໄຫລ ບໍ່ແມ່ນເພື່ອຈະເຮັດໃຫ້ທ່ານເປັນທຸກ ແຕ່ເພື່ອຈະໃຫ້ທ່ານຮູ້ຈັກຄວາມຮັກຢ່າງມາກມາຍຊຶ່ງຂ້າພະເຈົ້າມີຕໍ່ທ່ານທັງຫລາຍ" **2ໂກຣິນໂທ 2:4**

GCI

ມັລເຟອ ໄດ້ຕັ້ງຂໍ້ສັງເກດຄວາມຮ້ອນຮົນໃຈຂອງໂປໂລໄວ້ວ່າ

ຄວາມຮ້ອນໃຈຄືຄວາມຮູ້ສຶກທີ່ບັນຍາຍໄດ້ວ່າ ເປັນຄວາມຮູ້ສຶກເຜົາຜານ ຄວາມເລັ່ງຮ້ອນພາຍໃນວ່າພັນທະກິດອັນໃດອັນນຶ່ງຄືສິ່ງທີ່ພະເຈົ້າປະສົງໃຫ້ເຮົາເຮັດ ໃນໂຣມ 15:20 ໂປໂລໃຊ້ຖ້ອຍຄໍາທີ່ສະແດງເຖິງຄວາມເລັ່ງຮ້ອນໃຈຂອງທ່ານທີ່ຈະປະກາດພະກິດຕິຄຸນແກ່ຄົນຕ່າງຊາດ(ຂໍ້ 16) ຜູ້ນໍາຕ້ອງຮູ້ຈັກແຍກແຍະລະຫວ່າງ ຄວາມເລັ່ງຮ້ອນໃຈກັບຄວາມຮູ້ສຶກສົນໃຈທີ່ແວບເຂົ້າມາຊົ່ວຄັ້ງຊົ່ວຄາວ ຄວາມເລັ່ງຮ້ອນໃຈ "ຕິດແນ້ນຢູ່ໃນກະດູກ" ຄືຄົງທົນຢູ່ນານ ແຕ່ຄວາມສົນອົນສົນໃຈນັ້ນແວບເຂົ້າມາແລ້ວກໍຜ່ານໄປ ເກີດຂຶ້ນໃນວັນນີ້ແລ້ວຫາຍໄປໃນມື້ໜ້າ ແຕ່ຄວາມເລັ່ງຮ້ອນໃຈຄົງຢູ່ກັບເຮົາໄດ້ນານ ໂປໂລຂຽນໄວ້ວ່າ "ເປັນຄວາມມຸ້ງມາດປາດຖະນາຂອງຂ້າພະເຈົ້າຢູ່ສະເໝີທີ່ຈະປະກາດພະກິດຕິຄຸນ" ນັກກໍ່ຕັ້ງຄຣິສຕະຈັກບາງຄົນຍອມຮັບວ່າເທົ່າທີ່ເຂົາຈື່ໄດ້ ເຂົາຢາດທີ່ຈະເປັນຜູ້ກໍ່ຕັ້ງຄຣິສຕະຈັກມາຕະຫລອດ ນັ້ນແຫລະຄືຄວາມເລັ່ງຮ້ອນໃຈ

ເອກະສານອ້າງອີງ